# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາຄານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

09-16 ກໍລະກົດ 2026

ປີທີ 15

ສະບັບທີ 1073


## ກອງປະຊຸມສະໄໝວິສາມັນເທື່ອທີ 1 ໄຂຂຶ້ນຢ່າງເປັນທາງການ



(ສພຊ) - ກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ X ໄດ້ໄຂຂຶ້ນຢ່າງເປັນທາງການ ໃນຕອນເຊົ້າວັນຈັນທີ 6 ກໍລະກົດນີ້ ທີ່ຫ້ອງປະຊຸມໃຫຍ່ສະພາແຫ່ງຊາດ ໂດຍການເປັນປະທານຂອງທ່ານ ໄຊສົມພອນ ພົມວິຫານ ກຳມະການກົມການ

ອ່ານຕໍ່ໜ້າ 5

## 6 ເດືອນທ້າຍປີ ຊຸກຍູ້ການເຕີບໂຕເສດຖະກິດໃຫ້ບັນລຸ 5.5%, GDP ສະເລ່ຍລາຍຮັບຕໍ່ຫົວຄົນ 2,238 ໂດລາ



(ສພຊ) - ອີງຕາມບົດລາຍງານໂດຍສັງເຂບສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ໄລຍະ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2026 ທີ່ທ່ານ ສອນໄຊ ສີພັນດອນ ນາຍົກລັດຖະມົນຕີ ສະເໜີຕໍ່ກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ X ໃນຕອນເຊົ້າວັນຈັນທີ 6 ກໍລະກົດນີ້ ໂດຍສະເພາະຂົງເຂດວຽກງານເສດຖະກິດ ໃນໄລຍະ 6 ເດືອນຕົ້ນປີ ໃຫ້ຮູ້ວ່າ:

ເສດຖະກິດຂະຫຍາຍຕົວໃນລະດັບ 5%, ຄິດເປັນມູນຄ່າໃນປີເທົ່າກັບ 199,987 ຕື້ກີບ ເທົ່າກັບ 48% ຂອງແຜນການ (ມະຕິ ສພຊ: 417,523 ຕື້ກີບ) ໃນນີ້, ຂະແໜງກະສິກຳ: ຂະຫຍາຍຕົວ 4.3% ກວມເອົາ

ອ່ານຕໍ່ໜ້າ 8

## ສັງລວມການປະກອບຄຳເຫັນຂອງ ສສຊ ຕໍ່ທິດທາງແຜນການ 6 ເດືອນທ້າຍປີ



(ສພຊ) - ວັນທີ 7 ກໍລະກົດ 2026 ທ່ານ ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ໄດ້ສັງລວມການປະກອບຄຳເຫັນຂອງບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) 66 ທ່ານ ເປັນຍິງ 20 ທ່ານ ຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບການສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໄລຍະ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2026 ໂດຍສະເພາະທິດທາງແຜນການ 6 ເດືອນທ້າຍປີ ເຊິ່ງຜູ້ແທນຍັງມີຄວາມເປັນຫ່ວງກ່ຽວກັບການຈັດເກັບລາຍຮັບ,

ອ່ານຕໍ່ໜ້າ 6

## ຮອງປະທານສະພາແຫ່ງຊາດ ຮັບການເຂົ້າຢ້ຽມຂໍ່ານັບຂອງເລຂາທິການໃຫຍ່ ISC



ອ່ານຕໍ່ໜ້າ 5



ແນວຄິດປະທານ

### ໄກສອນ ພົມວິຫານ

ຜູ້ນຳທີ່ປະຊາຊົນເຄົາລົບຮັກ

ສ້າງອຳນາດການປົກຄອງປະຊາທິປະໄຕປະຊາຊົນ ໂດຍແມ່ນປະຊາຊົນຜູ້ອອກແຮງງານບັນດາເຜົ່າເປັນເຈົ້າ, ພາຍໃຕ້ການນຳພາຢ່າງເດັດຂາດຂອງພັກ ເຊິ່ງເປັນຕົວແທນ ແລະ ເປັນຜູ້ປົກປັກຮັກສາສິດ ແລະ ຜົນປະໂຫຍດຂອງເຂົາ ແລະ ຂອງປະເທດຊາດ ເຊິ່ງເປັນຜູ້ປະຕິບັດຄວາມສະເໝີພາບ ແລະ ຄວາມສາມາດລະຫວ່າງທຸກເຜົ່າ.

(ນິພົນເລືອກເຟັ້ນ ເຫຼັ້ມ 1, ໜ້າ 137)

ອ່ານຕໍ່ສະບັບໜ້າ




## ສູນທອນພົດກ່າວເປີດກອງປະຊຸມສະໄໝວິສາມັນເທື່ອທີ 1 ສະພາແຫ່ງຊາດ ຊຸດທີ X




(ສພຊ) - ໃນພິທີເປີດກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດ ຊຸດທີ X, ທ່ານ ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ໄດ້ກ່າວສູນທອນພົດເປີດກອງປະຊຸມວ່າ: ມື້ນີ້, ກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດ ຊຸດທີ X ໄດ້ຈັດ

ອ່ານຕໍ່ໜ້າ 5

## ສູ້ຊົນສ້າງຄອບຄົວພົ້ນທຸກ ໃຫ້ໄດ້ຫຼາຍກວ່າ 100,000 ຄອບຄົວ



(ສພຊ) - ບົດລາຍງານວາລະແຫ່ງຊາດ ວ່າດ້ວຍການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຕໍ່ກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດ ຊຸດທີ X ໃນຕອນບ່າຍວັນທີ 7 ກໍລະກົດ 2026 ທີ່ສະເໜີໂດຍທ່ານ ສັນ

ອ່ານຕໍ່ໜ້າ 8

# ຄປຈສພຊ ສະເໜີ 15 ມາດຕະການ ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນທ້າຍປີ



(ສພຊ) - ວາລະກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດ ຊຸດທີ X ໃນວັນທີ 6 ກໍລະກົດນີ້, ທ່ານ ວິໄລວົງ ບຸດດາຄຳ ຮອງປະທານສະພາແຫ່ງຊາດ ໄດ້ຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ (ຄປຈສພຊ) ມີຄຳເຫັນແນະນຳຕໍ່ກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 6 ເດືອນທ້າຍປີ 2026 ໂດຍສະເໜີບາງມາດຕະການເພີ່ມຕື່ມດັ່ງນີ້:

1. ຊຸກຍູ້ການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃຫ້ມີການຂະຫຍາຍຕົວ, ມີຄຸນນະພາບ, ຮັກສາສະຖຽນລະພາບດ້ານການເງິນ-ເງິນຕາ ໃຫ້ມີຄວາມໜັກແໜ້ນ, ຕໍ່ເນື່ອງ, ຍືນຍົງ ແລະ ບັນລຸຕາມແຜນການ.

2. ຊຸກຍູ້ສົ່ງເສີມການລົງທຶນພາຍໃນ ແລະ ຕ່າງປະເທດ ໂດຍສະເພາະການຜະລິດກະສິກຳເພື່ອຮັບປະກັນການຄ້ຳປະກັນສະບຽງອາຫານ, ການປຸງແຕ່ງຜະລິດຕະພັນກະສິກຳແລະອຸດສາຫະກຳເພື່ອທົດແທນການນຳເຂົ້າ ໂດຍຫັນປ່ຽນຈາກແນວຄິດແບບເປັນແຕ່ລະໂຄງການມາສູ່ການຄິດແບບເປັນລະບົບທີ່ມີການເຊື່ອມໂຍງລະຫວ່າງການຜະລິດ, ການປຸງແຕ່ງ, ການຂົນສົ່ງ, ການຕະຫຼາດ ເຂົ້າກັນເປັນຕ່ອງໂສ້ມູນຄ່າທີ່ສາມາດສ້າງລາຍຮັບທີ່ຍືນຍົງໃຫ້ກັບປະຊາຊົນ ຕິດພັນກັບວາລະແຫ່ງຊາດວ່າດ້ວຍການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໂດຍການສ້າງເສດຖະກິດຂຶ້ນມາຈາກຮາກຖານ, ສ່ວນການຂຸດຄົ້ນ ຫຼື ນຳໃຊ້ຊັບພະຍາກອນທຳມະຊາດອາດບໍ່ຈຳເປັນໃຫ້ການຍົກເວັ້ນ ຫຼື ຜ່ອນຜັນໃດໆ; ສ້າງມູນຄ່າເພີ່ມເປັນສິນຄ້າສົ່ງອອກໃຫ້ມີຄວາມຫຼາກຫຼາຍ ແລະ ເພີ່ມຜົນຜະລິດທີ່ມີຄຸນນະພາບ, ຫຼຸດຜ່ອນການສົ່ງອອກວັດຖຸດິບກະສິກຳ, ແຮ່ທາດ, ການຂາຍໄຟໂດຍກົງຈາກໂຄງການໄປຕ່າງປະເທດ, ມີມາດຕະການປົກປ້ອງຜູ້ຜະລິດພາຍໃນທີ່ເໝາະສົມ ເພື່ອໃຫ້ເວລາແກ່ເຂົາເຈົ້າພັດທະນາຕົນເອງໃຫ້ເຂັ້ມແຂງ.

3. ພັດທະນາຂະແໜງການທີ່ເປັນທ່າແຮງ ເປັນຕົ້ນແມ່ນອຸດສາຫະກຳພະລັງງານໄຟຟ້າ ແລະ ບໍ່ແຮ່ ໃຫ້ກາຍເປັນເສົາຄ້ຳການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໂດຍສະເພາະການພັດທະນາພະລັງງານສະອາດເປັນມິດຕໍ່ສິ່ງແວດລ້ອມ ໃຫ້ກວມສ່ວນໃຫຍ່ ແລະ ພິຈາລະນາພະລັງງານຖ່ານຫີນຈຳນວນໜຶ່ງຢ່າງເລັ່ງດ່ວນ ຕາມຍຸດທະສາດຂອງຂະແໜງການເພື່ອຮັບປະກັນສະຖຽນລະພາບ ແລະ ການສະໜອງໄຟຟ້າລະດູແລ້ງໃຫ້ພຽງພໍ ແລະ ມີແຜນໃຫ້ກຸ້ມຕົນເອງໄດ້ພາຍໃນປີ 2030; ນຳໃຊ້ທ່າແຮງຕ່າງໆ ເພື່ອໃຫ້ ສປປລາວ ກາຍເປັນສູນກາງການຄ້າພະລັງງານໃນຂົງເຂດພາກພື້ນ, ຊຸກຍູ້ກົນໄກການຄ້າລະຫວ່າງລະບົບສູ່ລະບົບ, ປັບປຸງອັດຕາພັນທະໄຟຟ້າທີ່ສົ່ງອອກຂາຍໃຫ້ຕ່າງປະເທດ ໃຫ້ມີຄວາມເໝາະສົມ, ສະໜອງພະລັງງານພາຍໃນໃຫ້ພຽງພໍ, ສ້າງລາຍຮັບເຂົ້າງົບປະມານໃຫ້ເພີ່ມຂຶ້ນ ໂດຍຢຸດຕິການຍົກເວັ້ນພາສີ-ອາກອນເກີນກວ່າທີ່ກົດໝາຍວ່າດ້ວຍສົ່ງເສີມການລົງທຶນ ໄດ້ກຳນົດໄວ້.

4. ຄຸ້ມຄອງ ແລະ ຕິດຕາມກວດກາຂະແໜງແຮ່ທາດໃຫ້ເຂັ້ມງວດເດັດຂາດ ໃນນັ້ນ, ກຳນົດເວລາພາຍໃນ 2-3 ປີ ໃຫ້ຢຸດຕິການສົ່ງອອກແຮ່ດິບ ເພື່ອກະຕຸ້ນໃຫ້ເກີດມີການກໍ່ສ້າງໂຮງງານຫຼອມ, ປຸງແຕ່ງພາຍໃນ; ສຳລັບບາງແຮ່ທາດເຂັ້ມຂຸ້ນ ເຊັ່ນ: ຄຳ, ທອງແດງ, ເງິນ ທີ່ເຮົາມີໂຮງຫຼອມແລ້ວ ຄວນຢຸດຕິເດັດຂາດສົ່ງອອກແຮ່ດິບ ຫຼື ແຮ່ເຂັ້ມຂຸ້ນດັ່ງກ່າວທັນທີ ພ້ອມທັງເປີດກວ້າງຮັບຕະຫຼາດໃໝ່ ເພື່ອປ້ອງກັນການຜູກຂາດດ້ານລາຄາສຳລັບບາງແຮ່ທາດຍຸດທະສາດ, ດັດສົມໂຄງການຂຸດຄົ້ນແຮ່ຫາຍາກ, ປະຕິບັດມາດຕະການເດັດຂາດຕໍ່ໂຄງການແຮ່ທາດທີ່ຜ່ານການປະເມີນຈັດຢູ່ໃນລະດັບປະເພດ C ຫຼື C+ ຕາມມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 95/ສພຊ, ລົງວັນທີ 18 ກໍລະກົດ 2023 ແລະ 133/ສພຊ, ລົງວັນທີ 1 ກໍລະກົດ 2024 ໃຫ້ສຳເລັດໃນປີ 2026. ຮີບຮ້ອນກຳນົດຄືນໃໝ່ປະເພດແຮ່ທາດທີ່ເປັນຍຸດທະສາດ ແລະ ແຮ່ທາດທົ່ວໄປ, ກຳນົດເຂດສະຫງວນ, ເຂດຫວງຫ້າມ, ເຂດທີ່ອະນຸຍາດໃຫ້ຂຸດຄົ້ນ ໃຫ້ຈະແຈ້ງ; ສຳລັບໂຄງການຢູ່ໃນໄລຍະສຶກສາ ກ່ອນຈະກ້າວເຂົ້າສູ່ໄລຍະຂຸດຄົ້ນໃນຕໍ່ໜ້າ ໃຫ້ຄັດເລືອກເອົາໂຄງການທີ່ເຫັນວ່າຄົບທຸກເງື່ອນໄຂ, ເປັນມືອາຊີບ, ມີປະສົບການ, ທຶນຮອນ ແລະ ມີເຕັກນິກວິຊາການທີ່ສາມາດຢັ້ງຢືນໄດ້ ແລະ ມີກົນໄກໃນການຄຸ້ມຄອງການຂຸດຄົ້ນໄປຕາມການອອກແບບ ຫຼື ແຜນການທີ່ວາງໄວ້ ເພື່ອຮັບປະກັນຄວາມປອດໄພ ແລະ ຜົນປະໂຫຍດຂອງປະຊາຊົນ, ລັດແລະຜູ້ລົງທຶນ ໃຫ້ເໝາະສົມ.

5. ຈັດຕັ້ງປະຕິບັດແຜນຄຸ້ມຄອງແລະຕິດຕາມກວດກາສິ່ງແວດລ້ອມຂອງໂຄງການພັດທະນາຢ່າງເຂັ້ມງວດ ພ້ອມທັງປະເມີນຜົນແຜນການດັ່ງກ່າວຢ່າງເປັນປະຈຳ ເພື່ອຫຼີກລ່ຽງບັນຫາຜົນກະທົບຕໍ່ສິ່ງແວດລ້ອມທີ່ຈະເກີດຂຶ້ນໃນຕໍ່ໜ້າ; ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນການປູກປ່າທົດແທນແລະການປົກປັກຮັກສາປ່າໄມ້ ຂອງໂຄງການລົງທຶນທີ່ໄດ້ຮັບອະນຸມັດໃຫ້ຫັນປ່ຽນທີ່ດິນປ່າໄມ້ ເພື່ອຮັບປະກັນເນື້ອທີ່ປ່າປົກຫຸ້ມໃຫ້ໄດ້ 65% ໃນປີ 2030 ທີ່ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ສະເໜີ.

6. ຂະຫຍາຍຖານພາສີ-ອາກອນ ແລະ ຈັດເກັບລາຍຮັບໃຫ້ໄດ້ຕາມແຜນການ ຫຼື ລື່ນແຜນ ໂດຍນຳໃຊ້ລະບົບອີເລັກໂຕຣນິກ (E-Tax Invoice, Tax Ris) ໃຫ້ກວມອັດຕາສ່ວນຫຼາຍໃນທົ່ວປະເທດ ເພື່ອເຊື່ອມຕໍ່ລະບົບໃບບິນຂອງກະຊວງການເງິນ ໃຫ້ເປັນເອກະພາບ; ສະກັດກັ້ນການຈັດເກັບອາກອນ

ອ່ານຕໍ່ໜ້າ 4

# ທັດສະນະ ຄປຈສພຊ ຕໍ່ການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ



(ສພຊ) - ວັນທີ 7 ກໍລະກົດນີ້, ທ່ານ ມອນໄຊ ລາວມົວຊົ່ງ ຮອງປະທານສະພາແຫ່ງຊາດ ໄດ້ຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ(ຄປຈສພຊ) ມີບາງທັດສະນະຕໍ່ບົດລາຍງານວາລະແຫ່ງຊາດ ວ່າດ້ວຍການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ດັ່ງນີ້:

1. ການພັດທະນາຊົນນະບົດໃນໄລຍະຜ່ານມາ ໂດຍສະເພາະການກໍ່ສ້າງພື້ນຖານໂຄງລ່າງ ເຫັນວ່າຍັງບໍ່ທັນມີຈຸດສຸມເທົ່າທີ່ຄວນ ເຊັ່ນ: ເສັ້ນທາງຄົມມະນາຄົມ, ໄຟຟ້າ, ໂທລະຄົມ ແລະ ການສື່ສານ, ໂຮງຮຽນ, ໂຮງໝໍ, ສຸກສາລາ, ສຳນັກງານອົງການ; ພ້ອມນີ້ ພື້ນຖານໂຄງລ່າງທີ່ໄດ້ຮັບການກໍ່ສ້າງສຳເລັດບາງໂຄງການ, ບາງບ່ອນຍັງບໍ່ທັນຮັບປະກັນຄຸນນະພາບເທົ່າທີ່ຄວນ. ການແກ້ໄຂບັນຫາຊີວິດການເປັນຢູ່ຂອງປະຊາຊົນຍັງບໍ່ທັນໄດ້ສຸມໃສ່ຢ່າງສົມເຫດສົມຜົນ.

2. ການຈັດສັນພູມລຳເນົາ ແລະ ອາຊີບຄົງທີ່ ຕ້ອງຮັບປະກັນຄວາມຍືນຍົງ; ການໂຮມບ້ານ ຕ້ອງສອດຄ່ອງກັບສະພາບຄວາມເປັນຈິງຂອງທ້ອງຖິ່ນ ໂດຍສະເພາະເຂດຍຸດທະສາດປ້ອງກັນຊາດ, ການໂຮມບ້ານບາງບ່ອນ ສາມາດໂຮມໄດ້ແຕ່ການຈັດຕັ້ງ, ແຕ່ປະຊາຊົນບໍ່ສາມາດໂຮມກັນໄດ້ ເນື່ອງຈາກທີ່ດິນທຳການຜະລິດບໍ່ພຽງພໍ, ເຮັດໃຫ້ປະຊາຊົນຈຳນວນໜຶ່ງ ກັບຄືນໄປຢູ່ບ້ານເກົ່າເພື່ອທຳການຜະລິດ ແລະ ຕົກເຂົ້າສູ່ກໍລະນີແຍກຕົວອອກຫ່າງຈາກອຳນາດການປົກຄອງບ້ານແລະອຳນາດການປົກຄອງບ້ານບາງບ່ອນ ກໍບໍ່ສາມາດຄຸ້ມຄອງໄດ້ຢ່າງທົ່ວເຖິງ, ກາຍເປັນຊ່ອງວ່າງກໍ່ໃຫ້ເກີດປາກົດການຫຍໍ້ທໍ້ ເຊັ່ນ: ບັນຫາຢາເສບຕິດ, ການຄ້າຂາຍເຖື່ອນ, ການບຸກລຸກຊັບພະຍາກອນທຳມະຊາດ ແລະ ອື່ນໆ ເຊິ່ງສົ່ງຜົນກະທົບເຖິງຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

3. ຄົ້ນຄວ້ານະໂຍບາຍ, ກຳນົດມາດຕະການຈັດຕັ້ງປະຕິບັດ ສຳລັບປະຊາຊົນ ແລະ ພາກທຸລະກິດ ທັງພາຍໃນ ແລະ ຕ່າງປະເທດ ໃຫ້ມີຄວາມເໝາະສົມເພື່ອຮັບປະກັນໃຫ້ປະຊາຊົນ ແລະ ພາກທຸລະກິດ ທັງພາຍໃນ ແລະ ຕ່າງປະເທດ ສາມາດປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດວາລະແຫ່ງຊາດນີ້ ໄດ້ຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

4. ແບ່ງຄວາມຮັບຜິດຊອບໃຫ້ແກ່ບາງຂະແໜງການຕື່ມ ເປັນຕົ້ນແມ່ນກະຊວງປ້ອງກັນປະເທດ ເນື່ອງຈາກບາງຈຸດສຸມທີ່ລັດຖະບານກຳນົດ ຕິດພັນກັບເຂດພື້ນຖານການປະຕິວັດ, ເຂດລຽບຊາຍແດນ; ທະນາຄານແຫ່ງສປປລາວຄົ້ນຄວ້າ, ສົ່ງເສີມ ບັນດາທະນາຄານທຸລະກິດ, ສະຖາບັນການເງິນ ມີນະໂຍບາຍປ່ອຍເງິນກູ້ທີ່ເໝາະສົມເພື່ອຮັບປະກັນໃຫ້ປະຊາຊົນເຂດຊົນນະບົດ ເຂົ້າເຖິງແຫຼ່ງທຶນກູ້ຢືມ.

5. ຕ້ອງເພີ່ມທະວີຄວາມເຂັ້ມງວດ ແລະ ເດັດຂາດໃນການບັງຄັບໃຊ້ກົດໝາຍ ເພື່ອຄຸ້ມຄອງລັດ-ຄຸ້ມຄອງສັງຄົມ, ປົກປັກຮັກສາ ແລະ ນຳໃຊ້ຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມ ຢ່າງມີປະສິດທິຜົນ ໂດຍສະເພາະການຄຸ້ມຄອງບັນດາໂຄງການຂຸດຄົ້ນແຮ່ທາດຕ່າງໆ ແລະ ຄຸ້ມຄອງບັນຫາສິ່ງແວດລ້ອມ.

6. ສຸມໃສ່ສ້າງບຸກຄະລາກອນກັບທີ່ ຕິດພັນກັບການຫັນພະນັກງານລົງກໍ່ສ້າງຮາກຖານການເມືອງ, ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຕາມທິດ 3 ສ້າງ.

# ມອບນ້ຳດື່ມຊຸກຍູ້ກອງປະຊຸມສະໄໝວິສາມັນເທື່ອທີ 1



(ສພຊ) - ວັນທີ 7 ກໍລະກົດນີ້ ທີ່ສະພາແຫ່ງຊາດ (ສພຊ) ໄດ້ມີພິທີມອບ-ຮັບນ້ຳດື່ມຫົວເສືອ ຂະໜາດ 350 ມິລິລິດ ຈຳນວນ 100 ຫີບ ລວມມູນຄ່າ 6.7 ລ້ານກີບ ຈາກບໍລິສັດ ເບຍລາວ ຈຳກັດ ເພື່ອປະກອບສ່ວນຊຸກຍູ້ກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງ ສພຊ ຊຸດທີ X, ມອບໂດຍທ່ານນາງ ທິບພາພອນ ຄຳມະນີວົງ ຕາງໜ້າບໍລິສັດ ເບຍລາວ ຈຳກັດ ແລະ ຕາງໜ້າຮັບໂດຍທ່ານ ຈັນໄລວັນ ພົມມາໄຊ ຮອງຫົວໜ້າກົມບໍລິຫານ, ຫ້ອງວ່າການສະພາແຫ່ງຊາດ ເຊິ່ງມີພາກສ່ວນກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພະຍານ.

# ສປນວ ເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກ



(ສພຂ ) - ໃນວັນທີ 16 ມິຖຸນາ ຜ່ານມາ ທ່ານ ທະນິງສິດ ເມືອງຈັນ ກຳມະການພັກ ນະຄອນຫຼວງວຽງຈັນ ຫົວໜ້າພະແນກເຕັກໂນໂລຊີ ແລະ ການສື່ສານ ນະຄອນຫຼວງວຽງຈັນ ສະມາຊິກ ສະພາແຫ່ງຊາດ ຊຸດທີ X ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ ທ່ານ ນາງ ບົວລະພັນ ທິລະສັກ ຄະນະປະຈຳສະພາປະຊາຊົນ ປະທານຄະນະກຳມະການ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຍຸຕິທຳ ສະພາປະຊາຊົນນະຄອນຫຼວງວຽງຈັນ ສະມາຊິກສະພາແຫ່ງຊາດ ຊຸດທີ X ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ ທ່ານ ນາງ ກັນທິນາ ປ້ານອິນທວນ ກຳມະການໜ່ວຍພັກຮາກຖານ, ຫົວໜ້າກົມຕິດຕາມກວດກາວຽກງານຍຸຕິທຳ ກຳມາທິການຍຸຕິທຳ ສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ ຊຸດທີ X ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ ໄດ້ລົງພົບປະແລະເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ V ຢູ່ ກອງບັນຊາການທະຫາ ນະຄອນຫຼວງວຽງຈັນ ໃຫ້ການຕ້ອນຮັບຂອງທ່ານ ພົຈວ ໂສພາວັນ ທຳມະເທວາ ຄະນະປະຈຳພັກນະຄອນຫຼວງ ເລຂາຄະນະພັກຫົວໜ້າການເມືອງກອງບັນຊາການທະຫານນະຄອນຫຼວງວຽງຈັນ ພ້ອມດ້ວຍຄະນະ ແລະ ພົນທະຫານ ເຂົ້າຮ່ວມ.



ຈຸດປະສົງ ພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດ ກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ V ເພື່ອຮັບຟັງຄຳຄິດຄຳເຫັນ ຄຳສະເໜີຂອງນາຍແລະພົນທະຫານ ກ່ຽວກັບບັນຫາຂັດຂ້ອງໜອງໃຈຕ່າງໆ ເພື່ອຈະນຳສະເໜີຕໍ່ສະພາປະຊາຊົນນະຄອນຫຼວງວຽງຈັນ ແລະ ພາກສ່ວນທີ່ກ່ຽວຂ້ອງ;

ສະມາຊິກສະພາແຫ່ງຊາດຊຸດທີX, ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ ລົງເຄື່ອນໄຫວພົບປະ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ V, ທີ່ກະຊວງເຕັກໂນໂລຊີ ແລະ ການສື່ສານ (ກຕສ).

ແລະ ໃນວັນທີ 18 ມິຖຸນາຜ່ານມາໂດຍການນຳພາຂອງທ່ານ ນະຄະເສນ ສີຫາລາດ, ກຳມະການພັກນະຄອນຫຼວງວຽງຈັນ, ຮອງປະທານຄະນະປະຈຳ ສະພາປະຊາຊົນ ນວ, ຮອງປະທານສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ V, ສະມາຊິກສະພາແຫ່ງຊາດ ຊຸດທີ X ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ ພ້ອມດ້ວຍບັນດາສະມາຊິກສະພາແຫ່ງຊາດຊຸດທີ X ປະຈຳເຂດເລືອກຕັ້ງທີ 1, ຕາງໜ້າຄະນະພັກ-ຄະນະນຳ ກະຊວງເຕັກໂນໂລຊີ ແລະ ການສື່ສານ ໃຫ້ກຽດເຂົ້າຮ່ວມໂດຍທ່ານ ໄຊລືຊາ ອິນສີຊຽງໃໝ່ ຄະນະປະຈຳພັກກະຊວງ, ຮອງລັດຖະມົນຕີກະຊວງເຕັກໂນໂລຊີ ແລະ ການສື່ສານ ທັງເປັນ ສະມາຊິກສະພາແຫ່ງຊາດ ຊຸດທີ X ປະຈຳເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ ມີບັນດາທ່ານຫົວໜ້າຫ້ອງການ, ກົມ, ສູນ, ສະຖາບັນ, ອົງການ ແລະ ບັນດາບໍລິສັດ ຂຶ້ນກັບອົງຄະນະພັກຂອງກະຊວງເຕັກໂນໂລຊີ ແລະ ການສື່ສານເຂົ້າຮ່ວມ.

ຈຸດປະສົງຂອງການລົງພົບປະຄັ້ງນີ້, ກໍເພື່ອພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ V. ເຊິ່ງເປັນການສະແດງເຖິງຄວາມເອົາໃຈໃສ່ຢ່າງໃກ້ຊິດຕໍ່ຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ, ໂດຍສະເພາະ ການຊຸກຍູ້ວຽກງານຫັນເປັນດິຈິຕອນຂອງ ສປປລາວ ບົນ 3 ເສົາຄໍ້າພາຍໃຕ້ ວິໃສທັດການພັດທະນາເສດຖະກິດດິຈິຕອນ ຮອດປີ 2040 ແລະ ແຜນການ 5 ປີ ເທື່ອທີ X ຂອງ ສປປລາວ. ທັງນີ້ ກໍເພື່ອຮັບຟັງຄຳຄິດຄຳເຫັນ, ຄຳສະເໜີຂອງພະນັກງານແຫຼ່ງແລະພະນັກງານອ້ອມຂ້າງກະຊວງ ກ່ຽວກັບບັນຫາຂັດຂ້ອງໜອງໃຈຕ່າງໆ ເພື່ອສະເໜີຕໍ່ສະພາປະຊາຊົນນະຄອນຫຼວງວຽງຈັນ ແລະ ພາກສ່ວນກ່ຽວຂ້ອງ.

ໃນວັນທີ 20 ມິຖຸນາ ຜ່ານມາທ່ານ ທະນົງໄຊ ຄູດໄພທູນກຳມະການສຳຮອງສູນກາງພັກ, ກຳມະການປະຈຳພັກ ນວ ຮອງປະທານສະພາປະຊາຊົນ ນ ວ ຊຸດທີ V ພ້ອມດ້ວຍຄະນະ ໄດ້ລົງເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມດັ່ງກ່າວ ຢູ່ຕາແສງຫາດຫຼວງ ເມືອງໄຊເສດຖາເຊິ່ງຕ້ອນຮັບໂດຍທ່ານແສງພັນມະນີ ກຳມະການປະຈຳພັກເມືອງ, ປະທານແນວລາວສ້າງຊາດເມືອງ ແລະ ມີບັນດາພະນັກງານເມືອງ, ອຳນາດການປົກຄອງຂັ້ນບ້ານ ແລະ ປະຊາຊົນພາຍໃນຕາແສງເຂົ້າຮ່ວມ.

ໃນດຽວກັນບັນດາສະມາຊິກມາມຊິກສະພາແຫ່ງຊາດ ຊຸດທີ X (ສສຊ) ແລະ ສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນຊຸດທີ V (ສສນວ) ໄດ້ລົງພົບປະຜູ້ມີສິດເລືອກຕັ້ງຢູ່ເມືອງສີສັດຕະນາກນະຄອນຫຼວງວຽງຈັນເຊິ່ງກຸ່ມ1 ນຳໂດຍທ່ານ ໄຊນະຄອນ ອິນທະວົງ ຮອງເລຂາຄະນະພັກຮອງລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ ສະມາຊິກສະພາແຫ່ງຊາດ ຊຸດທີ X ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ, ພ້ອມຄະນະໄດ້ລົງພົບຜູ້ມີສິດເລືອກຕັ້ງທີ່ສະໂມສອນ ບ້ານໂພນປ່າເປົ້າ ແລະ ກຸ່ມທີ 2 ນຳໂດຍທ່ານ ນາງ ກັນທິນາ ປ້ານອິນທວນ ສະມາຊິກສະພາແຫ່ງຊາດ ປະຈຳກຳມາທິການກົດໝາຍ ແລະ ຍຸຕິທຳ, ສະມາຊິກສະພາແຫ່ງຊາດ ຊຸດທີ X ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ ພ້ອມຄະນະ, ໄດ້ລົງພົບປະຜູ້ມີສິດເລືອກຕັ້ງ ທີ່ໂຮງຮຽນປະຖົມຫາຍໂສກ ເຊິ່ງມີອຳນາດການປົກຄອງບ້ານ, ອົງການຈັດຕັ້ງມະຫາຊົນ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ປກຊ-ປກສ ບ້ານ ແລະ ປະຊາຊົນຜູ້ມີສິດເລືອກຕັ້ງ 14 ບ້ານເຂົ້າຮ່ວມ.

ໃນໂອກາດລົງພົບຜູ້ມີສິດເລືອກຕັ້ງຂອງບັນດາ ສສຊ ແລະ ສສນວ ຄັ້ງນີ້: ກຸ່ມທີ 1 ໄດ້ຮັບຟັງການລາຍງານສະພາບລວມ ໂດຍຫຍໍ້ຂອງບ້ານ ແລະ ກຸ່ມທີ2 ໄດ້ຮັບຟັງການລາຍງານໂດຍຫຍໍ້ກ່ຽວກັບສະພາບການລວມຂອງເມືອງ ແລະ ການກະກຽມສ້າງຕັ້ງຕາແສງຈອມແຈ້ງ ຈາກນັ້ນ, ບັນດາສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ V ໄດ້ຜັດປ່ຽນກັນ ເຜີຍເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກຂອງ ສະພາແຫ່ງຊາດ ຊຸດທີ X ແລະ ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກຂອງສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ V.

ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມ ໂດຍສະເພາະກໍຄືຜູ້ທີ່ມີສິດເລືອກຕັ້ງ ໄດ້ປະກອບຄຳຄິດຄຳເຫັນ ແລະ ຄຳສະເໜີຕ່າງໆ ທີ່ມີຄວາມຂັດຂ້ອງໜອງໃຈສະເໜີຕໍ່ບັນດາສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ ເພື່ອໄດ້ນຳເອົາຄຳຄິດຄຳເຫັນດັ່ງກ່າວນຳໄປຄົ້ນຄວ້າ, ພິຈາລະນາ ແລ້ວນຳໄປສະເໜີຕໍ່ພາກສ່ວນທີ່ກ່ຽວຂ້ອງເພື່ອກ້າວໄປສູ່ການຈັດຕັ້ງປະຕິບັດກັບສະພາບຄວາມເປັນຈິງ;

ແລະ ໃນວັນດຽວກັນ ບັນດາສະມາຊິກມາຊິກສະພາແຫ່ງຊາດ ຊຸດທີ X (ສສຊ) ແລະ ສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ V (ສປນວ)ໄດ້ລົງພົບປະຜູ້ມີສິດເລືອກຕັ້ງຢູ່ເມືອງປາກງື່ມ ເຊິ່ງກຸ່ມ 1 ນຳໂດຍ ທ່ານ ນະຄະເສນ ສີຫາລາດ, ກຳມະການພັກ ນວ, ຮອງປະທານ ສະພາປະຊາຊົນ ນວ ພ້ອມຄະນະໄດ້ລົງພົບຜູ້ມີສິດເລືອກຕັ້ງທີ່ຕາແສງສິນໄຊ ເມືອງປາກງື່ມ ແລະ ກຸ່ມທີ 2 ນຳໂດຍ ທ່ານ ພັທ ນາດ ເທບພະວົງ ກຳມະການຄະນະພັກກອງບັນຊາການ, ຮອງຫົວໜ້າກອງບັນຊາການ, ຫົວໜ້າຫ້ອງການພະລາທິການທະຫານນວ, ສະມາຊິກສະພາແຫ່ງຊາດ ຊຸດທີ X ປະຈຳເຂດເລືອກຕັ້ງທີ 1 ນວ ພ້ອມຄະນະ ໄດ້ລົງພົບປະຜູ້ມີສິດເລືອກຕັ້ງຢູ່ທີ່ຕາແສງນາຊອນ ເມືອງປາກງື່ມ ເຊິ່ງໃນແຕ່ລະຕາແສງໄດ້ມີບັນດາທ່ານຄະນະນຳເມືອງ, ອຳນາດການປົກຄອງບ້ານ, ອົງການຈັດຕັ້ງມະຫາຊົນ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ປກຊ-ປກສ ບ້ານ ແລະ ປະຊາຊົນພາຍໃນຕາແສງເຂົ້າຮ່ວມ.

ຈຸດປະສົງໃນການລົງພົບປະຄັ້ງນີ້ ເພື່ອສືບຕໍ່ເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ V ແລະເພື່ອຮັບຟັງຄຳຄິດຄຳເຫັນ, ຄຳສະເໜີຂອງຜູ້ມີສິດເລືອກຕັ້ງ ເພື່ອນຳສະເໜີຕໍ່ພາກສ່ວນທີ່ກ່ຽວຂ້ອງພິຈາລະນາແກ້ໄຂ;

ພ້ອມດຽວກັນນັ້ນ, ສະມາຊິກສະພາແຫ່ງຊາດຊຸດທີX ເຂດທີ 1 ນະຄອນຫຼວງວຽງຈັນ ແລະ ສະມາຊິກສະພາປະຊາຊົນ ນະຄອນຫຼວງວຽງຈັນ ຊຸດທີ V ເຂດເມືອງຫາດຊາຍຟອງ ໄດ້ຮ່ວມລົງພົບປະກັບຜູ້ມີສິດເລືອກຕັ້ງຈຳນວນ 8 ບ້ານໃນກຸ່ມ 6 ທ່າພະ ແລະ ກຸ່ມ 7 ສີມມະໂນ ຢູ່ທີ່ຫ້ອງການບ້ານສີມມະໂນ ເພື່ອເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກ ຂອງ ສສຊ ຊຸດທີ X ແລະ ສສ.ນວ ຊຸດທີ V ເຊິ່ງນຳພາໂດຍ ທ່ານ ສົມສະຫວາດ ກົມໄຊຊະນະ ສະມາຊິກສະພາແຫ່ງຊາດ ຊຸດທີ X ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ ທ່ານ ນາງ ສ້ອຍສຸດາ ອິນເມືອງໄຊ ສສນວ ຊຸດທີ V ເຂດເມືອງຫາດຊາຍຟອງ ໂດຍການຕ້ອນຮັບຂອງທ່ານ ພັທ ຫຼອນລ້າ ບາສີວົງ ຫົວໜ້າກອງບັນຊາການທະຫານເມືອງຫາດຊາຍຟອງ ຜູ້ຊີ້ນຳກຸ່ມ 6-7 ສີມມະໂນ ພ້ອມດ້ວຍຄະນະພະນັກງານກໍ່ສ້າງຮາກຖານການເມືອງການຈັດຕັ້ງບ້ານ ແລະ ປະຊາຊົນເຂົ້າຮ່ວມຮັບຟັງ.



ໃນໂອກາດຂອງການລົງພົບປະ ແລະ ເຜີຍແຜ່ຜົນສຳເລັດຂອງກອງປະຊຸມ ທັງ 2 ສະພາຄັ້ງ ກໍຍັງໄດ້ຮັບຟັງການລາຍງານໃຫ້ຮູ້ຕໍ່ສະພາບລວມໂດຍຕ່າງໆຢູ່ພາຍໃນກຸ່ມ ເຊິ່ງປັດຈຸບັນແມ່ນໄດ້ສຸມໃສ່ຈັດຕັ້ງປະຕິບັດຕາມທິດຊີ້ນຳຂອງຂັ້ນເທິງ ໃນການກະກຽມ ຄວາມພ້ອມເພື່ອປະກາດສ້າງຕັ້ງຕາແສງ ພ້ອມນີ້ທ່ານສະມາຊິກສະພາ ສສຊ ແລະ ສສນວ ກໍໄດ້ພ້ອມກັນນຳສະເໜີເຜີຍແຜ່ຕໍ່ກັບບັນດາເນື້ອໃນ ແລະ ຜົນສຳເລັດຂອງກອງປະຊຸມຄັ້ງປະຖົມມະລຶກຂອງສະພາທັງ 2 ທີ່ໄດ້ພິຈາ

ອ່ານຕໍ່ໜ້າ 4

# ຮອງປະທານ ສພຂ ເຄື່ອນໄຫວຊຸກຍູ້ ແລະ ເກັບກຳຂໍ້ມູນບຸກຄະລາກອນ




(ສພຂ) - ວັນທີ 15 ມິຖຸນານີ, ທ່ານ ສີສະຫວາດ ເພັງທະລັງສີ ກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງ ພ້ອມດ້ວຍຄະນະ ໄດ້ລົງເຄື່ອນໄຫວຊຸກຍູ້ ແລະ ເກັບກຳຂໍ້ມູນບຸກຄະລາກອນຫ້ອງການຄະນະສະມາຊິກສະພາປະຊາຊົນແຂວງ(ສສຂ)ປະຈຳເຂດເລືອກຕັ້ງເມືອງສອງຄອນ ໂດຍການຕ້ອນຮັບ ແລະ ຮ່ວມເຮັດວຽກຂອງທ່ານ ລິນທອງ ບຸນທະມາລີ ກຳມະການພັກແຂວງ, ເລຂາຄະນະບໍລິຫານພັກເມືອງ, ຫົວໜ້າຄະນະ ສສຂ ປະຈຳເຂດເລືອກຕັ້ງ ພ້ອມດວ້ຍຄະນະ; ມີ ສສຂ ປະຈຳເຂດເລືອກຕັ້ງ, ຫົວໜ້າຄະນະຈັດຕັ້ງເມືອງ, ຫົວໜ້າຫ້ອງວ່າການເມືອງ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ທັງນີ້, ເພື່ອຊຸກຍູ້ວຽກງານການຈັດຕັ້ງບຸກຄະລາກອນ, ເກັບກຳຂໍ້ມູນພື້ນຖານ, ຕິດຕາມການປະຕິບັດໜ້າທີ່ ແລະ ສະພາບຕົວຈິງຂອງບຸກຄະລາກອນ ເພື່ອນຳໄປເປັນຂໍ້ມູນປະກອບໃນການຄຸ້ມຄອງ, ການວາງແຜນ, ການຈັດສັນແລະພັດທະນາບຸກຄະລາກອນໃນໄລຍະຕໍ່ໄປ ແລະ ຍົກສູງຄຸນນະພາບການຄຸ້ມຄອງບຸກຄະລາກອນ ແລະ ການປະຕິບັດໜ້າທີ່ຂອງ ສສຂ ໃຫ້ມີປະສິດທິຜົນສູງຂຶ້ນ ແລະ ປະຕິບັດແຜນວຽກຂອງສະພາປະຊາຊົນແຂວງ ເພື່ອຮັບປະກັນໃຫ້ວຽກງານບຸກຄະລາກອນມີຄວາມເປັນລະບົບ, ສອດຄ່ອງກັບແນວທາງ ແລະ ນະໂຍບາຍຂອງພັກ-ລັດ ໃນແຕ່ລະໄລຍະ ສາມາດຕອບສະໜອງຕໍ່ຄວາມຕ້ອງການການພັດທະນາຂອງທ້ອງຖິ່ນໄດ້ດີຂຶ້ນ.

ໃນການເຄື່ອນໄຫວໄດ້ຮັບຟັງການລາຍງານສະພາບລວມຂອງວຽກງານບຸກຄະລາກອນ, ແລກປ່ຽນຄວາມຄິດເຫັນ ແລະ ແນະນຳບາງບັນຫາສຳຄັນ ເພື່ອໃຫ້ການຄຸ້ມຄອງ ແລະ ນຳໃຊ້ບຸກຄະລາກອນມີປະສິດທິຜົນສູງຂຶ້ນ ທັງເນັ້ນໜັກໃຫ້ສືບຕໍ່ເອົາໃຈໃສ່ວຽກງານການກໍ່ສ້າງ ແລະ ພັດທະນາບຸກຄະລາກອນ, ສ້າງຄວາມໂປ່ງໃສ ແລະ ຍຸຕິທຳໃນການບໍລິຫານບຸກຄະລາກອນ ເພື່ອໃຫ້ຕອບສະໜອງຕໍ່ໜ້າທີ່ວຽກງານໃນໄລຍະໃໝ່ໄດ້ຢ່າງມີປະສິດທິຜົນ.



## ຄປຈສພຊ...

(ຕໍ່ຈາກໜ້າ 2)

ແບບຕໍ່ລອງມອບເໝົາ, ຈັດເກັບພາສີ-ອາກອນນໍ້າມັນເຊື້ອໄຟ, ພະລັງງານໄຟຟ້າ, ບໍ່ແຮ່, ການຂົນສົ່ງ, ຄ່າເຊົ່າ-ສຳປະທານ, ທຸລະກິດອີເລັກໂຕຣນິກ ແລະ ຂະແໜງບໍລິການຕ່າງໆ ໃຫ້ຄົບຖ້ວນຕາມກົດໝາຍ.

7. ຈັດສັນງົບປະມານຂອງລັດໃຫ້ໄດ້ຕາມແຜນການ ຄຽງຄູ່ກັບການຄົ້ນຄວ້າສ້າງແຜນການຊຳລະໜີ້ສິນຕ່າງປະເທດ ໃຫ້ມີແຫຼ່ງທຶນຊຳລະທີ່ແນ່ນອນ, ໝັ້ນຄົງ ແລະ ຍືນຍົງ ໂດຍການນຳໃຊ້ທ່າແຮງລາຍຮັບໄລຍະຍາວຈາກໂຄງການພະລັງງານ ໃນການເຈລະຈາປັບປຸງໂຄງສ້າງໜີ້ສິນ ແລະ ຫຼີກລ່ຽງການຂາຍຮຸ້ນ ຫຼື ຊັບສິນທີ່ຈະສ້າງລາຍຮັບໄລຍະຍາວແກ່ງົບປະມານແຫ່ງລັດ.

8. ຫຼຸດຜ່ອນການສະເໜີຂໍຍົກເວັ້ນ, ການຫຼຸດຜ່ອນພາສີ-ອາກອນ ໃນທຸກກິດຈະການ ຫຼື ການລົງທຶນທີ່ບໍ່ນອນໃນກິດຈະການສະເພາະທີ່ຕ້ອງການສົ່ງເສີມພິເສດ ແລະ ເພີ່ມທະວີຄວາມເຂັ້ມງວດໃນການຈັດຕັ້ງປະຕິບັດກົດໝາຍໃຫ້ມີຜົນສັກສິດ.

9. ປະຕິບັດນະໂຍບາຍຮັກສາສະຖຽນລະພາບດ້ານເງິນຕາ, ນຳເຂົ້າເງິນຕາຈາກການລົງທຶນ ແລະ ການສົ່ງອອກສິນຄ້າຜ່ານລະບົບທະນາຄານໃຫ້ເພີ່ມຂຶ້ນ; ຂະຫຍາຍລະບົບຕະຫຼາດແລກປ່ຽນເງິນຕາຂອງລາວ (LFX); ຄຸ້ມຄອງລາຄາສິນຄ້າ ແລະ ບໍລິການ ໃຫ້ມີຄວາມກົມກຽວກັນໃນໄລຍະການຂຶ້ນ-ລົງຂອງລາຄານໍ້າມັນ, ອັດຕາແລກປ່ຽນ ແລະ ປັດໄຈອື່ນໆຈາກພາຍນອກ ໂດຍສະເພາະຕໍ່ກັບໝວດສິນຄ້າ ແລະ ບໍລິການພື້ນຖານທີ່ສົ່ງຜົນກະທົບຕໍ່ການດຳລົງຊີວິດ.

10. ສຸມໃສ່ກໍ່ສ້າງ ແລະ ບູລະນະສ້ອມແປງທາງໃຫ້ໄດ້ມາດຕະຖານ ແລະ ສາມາດນຳໃຊ້ໄດ້ປົກກະຕິ ໃຫ້ສົມຄູ່ກັບງົບປະມານການລົງທຶນ; ສືບຕໍ່ປະຕິບັດນະໂຍບາຍຊຸກຍູ້ສົ່ງເສີມການກໍ່ສ້າງແລະສ້ອມແປງທາງໄລຍະໃໝ່ ຕາມມະຕິສະບັບເລກທີ 165/ສພຊ, ລົງວັນທີ 26 ມິຖຸນາ 2025 ໃຫ້ສຳເລັດ ເພື່ອເຊື່ອມຕໍ່ເຂດຜະລິດ, ໂຮງງານປຸງແຕ່ງ, ການຂົນສົ່ງສິນຄ້າ, ການສັນຈອນຂອງປະຊາຊົນ ແລະ ການທ່ອງທ່ຽວ.

11. ທົບທວນຄືນ ແລະ ມີລະບົບກົນໄກໃນການສ້າງລາຍຮັບທາງກົງໃຫ້ແກ່ປະເທດຊາດ ຈາກການເປັນປະເທດເຊື່ອມຈອດເຊື່ອມໂຍງທີ່ມີທ່າບົກ ແລະ ເສັ້ນທາງເຊື່ອມຕໍ່ລະຫວ່າງປະເທດ.

12. ເອົາໃຈໃສ່ປະຕິບັດຄາດໝາຍທີ່ຍັງມີຄວາມຄືບໜ້າໜ້ອຍຂອງຂະແໜງການສຶກສາ ແລະ ສາທາລະນະສຸກ ໃຫ້ບັນລຸຕາມແຜນການ ເປັນຕົ້ນ: ການແກ້ໄຂບັນຫາການຂາດແຄນຄູ ແລະ ແພດຢູ່ຊົນນະບົດ, ການປະລະການຮຽນ, ຄຸນນະພາບຂອງຄູ ແລະ ນັກຮຽນ, ກະກຽມຄວາມພ້ອມດ້ານຕ່າງໆ ເພື່ອເປີດສົກຮຽນໃໝ່, ການປັບປຸງລະບົບການສຶກສາສາຍສາມັນຈາກ 5+4+3 ເປັນ 6+3+3; ອັດຕາເກີດລູກມີແພດຊ່ວຍ, ອັດຕາການໃຫ້ວັກຊີນກັນພະຍາດໃຫ້ເດັກລຸ່ມ 1 ປີ.

13. ປະຕິບັດຄາດໝາຍພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຕິດພັນກັບການກໍ່ສ້າງຮາກຖານການເມືອງໃຫ້ແຂງແຮງກວ່າເກົ່າ ຕາມຈຸດສຸມລັດຖະບານ ແລະ ທ້ອງຖິ່ນ, ສືບຕໍ່ສ້າງຕັ້ງຕາແສງໃຫ້ສຳເລັດຕາມຄາດໝາຍ 617 ຕາແສງໃນກາງປີ 2027, ພ້ອມທັງສະໜອງງົບປະມານໃຫ້ພຽງພໍໃນການຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານດັ່ງກ່າວ.

14. ເອົາໃຈໃສ່ການພັດທະນາຊັບພະຍາກອນມະນຸດ ໂດຍສະເພາະສາຂາວິຊາຮຽນ, ວິຊາຊີບ ໃຫ້ສອດຄ່ອງກັບທ່າອຽງຂອງຍຸກສະໄໝ ແລະ ໄປລວງດຽວກັບຍຸດທະສາດການພັດທະນາເສດຖະກິດ-ສັງຄົມ, ການຜະລິດ ແລະ ການບໍລິການ ເພື່ອຍົກສະມັດຖະພາບການຜະລິດໃຫ້ສູງຂຶ້ນດ້ວຍການປັບປຸງລະບົບການສຶກສາ, ພັດທະນາແຮງງານໃຫ້ມີທັກສະ, ພັດທະນາພື້ນຖານໂຄງລ່າງທີ່ມີຈຸດສຸມ, ປັບປຸງສູນພັດທະນາສີມືແຮງງານ ແລະ ໂຄງສ້າງຄ່າແຮງງານໃຫ້ມີຄວາມເໝາະສົມ ເພື່ອສະໜອງແຮງງານໃຫ້ພຽງພໍກັບຄວາມຕ້ອງການຂອງຕະຫຼາດແຮງງານພາຍໃນ ແລະ ຕ່າງປະເທດ.

15. ເອົາໃຈໃສ່ພັດທະນາ ແລະ ຂະຫຍາຍຜະລິດຕະພັນການທ່ອງທ່ຽວ ໃຫ້ເປັນທ່າແຮງລະດັບຊາດ, ອາຊຽນ, ພາກພື້ນ ແລະ ສາກົນ ໃນການສົ່ງເສີມ ແລະ ພັດທະນາການທ່ອງທ່ຽວແບບລະບົບນິເວດ, ຊຸມຊົນມີສ່ວນຮ່ວມ ນຳໃຊ້ມໍລະດົກວັດທະນະທຳ, ບຸນປະເພນີ ຂອງຊາດ ແລະ ທ້ອງຖິ່ນ.




## ສປນວ...

(ຕໍ່ຈາກໜ້າ 3)

ລະນາຮັບຮອງເອົາບັນດາວຽກງານສຳຄັນຢູ່ໃນແຕ່ລະຂົງເຂດ ເປັນຕົ້ນຂົງເຂດຂອງສະພາແຫ່ງຊາດ ຂົງເຂດຂອງລັດຖະບານ ຂົງເຂດຂອງອົງການກວດກາແຫ່ງລັດ ແລະ ອົງການກວດສອບແຫ່ງລັດ ຂົງເຂດຂອງສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ແລະ ຜົນສຳເລັດຂອງການເລືອກຕັ້ງ ແມ່ນ ຢັ້ງຢືນເອົາຄຸນລັກສະນະຂອງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດທີ V ພິຈາລະນາ ແລະ ຮັບຮອງເອົາການເລືອກຕັ້ງບັນດາຕຳແໜ່ງທີ່ສຳຄັນຂອງລັດ ແລະ ໂຄງປະກອບກົງຈັກການຈັດຕັ້ງຂອງອົງການອຳນາດລັດ ຮັບຮອງເອົາບົດລາຍງານກ່ຽວກັບແຜນການເຄື່ອນໄຫວວຽກງານ 5 ປີ ແລະ ຮັບຮອງເອົາແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ 2026-2030 ຂອງສະພາແຫ່ງຊາດ ຊຸດທີ X ພ້ອມທັງໄດ້ຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X ຂອງລັດຖະບານ 2026-2030 ສ່ວນສະພາປະຊາຊົນນະຄອນຫຼວງວຽງຈັນ ກໍໄດ້ຮັບຮອງເອົາຜົນການເລືອກຕັ້ງ ຢັ້ງຢືນຄຸນລັກສະນະຂອງສະມາຊິກສະພາປະຊາຊົນ ຊຸດທີ V ແລະ ກໍໄດ້ດຳເນີນການເລືອກຕັ້ງຕຳແໜ່ງສຳຄັນຕ່າງໆຂອງອົງການອຳນາດລັດ ຂັ້ນນະຄອນຫຼວງວຽງຈັນ ພ້ອມທັງຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມ ແຜນງົບປະມານແຫ່ງລັດ 5 ປີ ຄັ້ງທີ X ຂອງນະຄອນຫຼວງວຽງຈັນ ຮັບຮອງເອົາແຜນການເຄື່ອນໄຫວວຽກງານ 5 ປີ 2026-2030 ຂອງສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ V ແລະ ຮັບຮອງເອົາບັນຫາສຳຄັນອື່ນໆຂອງນະຄອນຫຼວງວຽງຈັນອີກດ້ວຍ.

ຈາກນັ້ນ, ປະຊາຊົນຍັງໃຫ້ຄວາມສົນໃຈ ແລະ ນຳສະເໜີບັນຫາຕ່າງໆຕໍ່ ສສສຊ ແລະ ສສ.ນວ ແລະ ຊ່ວຍໃຫ້ແກ້ໄຂ ເປັນຕົ້ນ ບັນຫາຊົນລະປະທານເກົ່າໄດ້ຖືກອັດຕັນ ນໍ້າບໍ່ໄຫຼ ໄຟຟ້າທີ່ມີລາຄາແພງຂຶ້ນ ແກ້ໄຂຄູປ້ອງກັນນໍ້າຖ້ວມ ບັນຫາຂອງຊາວນາຜົນຜະລິດເຂົ້າລາຄາຖືກແຕ່ລາປຸ໋ຍຄ່າລົດໄຖພັດແພງ ບັນຫານໍ້າຖ້ວມອັ່ງຂັງ ແລະ ອື່ນໆທີ່ໄດ້ຖືກນຳສະເໜີຕໍ່ສສຊແລະ ສສ.ນວແມ່ນຢາກໃຫ້ຊ່ວຍແກ້ໄຂຢ່າງຈິງຈັງເພາະບັນຫາດັ່ງກ່າວແມ່ນໄດ້ສະເໜີມາຫຼາຍຄັ້ງແລ້ວແຕ່ກໍ່ຍັງບໍ່ໄດ້ຮັບການແກ້ໄຂ;

ແລະ ວັນທີ 20 ມິຖຸນາຜ່ານມາ ທ່ານ ປອ. ໄພທູນ ທ່ຽງລະໄມ, ກຳມະການຄະນະພັກກະຊວງ, ຫົວໜ້າກົມຄຸ້ມຄອງວິສາຫະກິດການເງິນ, ກະຊວງການເງິນ, ສະມາຊິກສະພາແຫ່ງຊາດ ຊຸດທີ X ປະຈຳເຂດເລືອກຕັ້ງທີ 1 ນວ ພ້ອມດ້ວຍຄະນະ ໄດ້ລົງພົບປະ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກ ສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ V ຢູ່ທີ່ຄະນະກຳມະການປົກຄອງເມືອງໄຊເສດຖາ ນວ, ເຊິ່ງໃຫ້ການຕ້ອນຮັບແລະລາຍງານສະພາບລວມການຈັດຕັ້ງປະຕິບັດວຽກງານຂອງເມືອງ ໂດຍທ່ານ ກຸມພະວາ ຈຳປາສຸກ, ຮອງເລຂາຄະນະບໍລິຫານພັກເມືອງໄຊເສດຖາ, ປະທານ ຄະນະກຳມະການປົກຄອງເມືອງໄຊເສດຖາ ເຊິ່ງມີບັນດາຫ້ອງການອ້ອມຂ້າງແລະພະນັກງານຂອງຄະນະກຳມະການປົກຄອງເມືອງ ເຂົ້າຮ່ວມ.

ຈຸດປະສົງໃນການລົງພົບປະຄັ້ງນີ້ ກໍເພື່ອພົບກັບປະຄະນະນຳ-ພະນັກງານຂອງເມືອງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ V ພ້ອມທັງຮັບຟັງຄຳຄິດຄຳເຫັນ ຄຳສະເໜີ ຂອງພະນັກຄະນະກຳມະການປົກຄອງເມືອງ ກ່ຽວກັບບັນຫາຂັດຂ້ອງໝອງໃຈຕ່າງໆ ເພື່ອນຳໄປສະເໜີຕໍ່ພາກສ່ວນທີ່ກ່ຽວຂ້ອງ ພິຈາລະນາແກ້ໄຂຕາມພາລະບົດບາດໃຫ້ດີຂຶ້ນ.



## ຮອງປະທານ...

(ຕໍ່ຈາກໜ້າ 1)

(ສພຊ) - ວັນຈັນທີ 6 ກໍລະກົດ 2026, ທ່ານ ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງທ່ານ ເອກ ນັທ ດາກາລ (Ek Nath Dhakal) ເລຂາທິການໃຫຍ່ອົງການກອງປະຊຸມປະທານລັດຖະສະພາສາກົນ(ISC) ພ້ອມດ້ວຍຄະນະ ໃນໂອກາດທີ່ມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປລາວ.

ໂອກາດນີ້, ທ່ານຮອງປະທານສະພາແຫ່ງຊາດ ໄດ້ກ່າວສະແດງຄວາມຕ້ອນຮັບຢ່າງອົບອຸ່ນ ພ້ອມທັງຕີລາຄາການມາຢ້ຽມຢາມ ສປປລາວ ໃນຄັ້ງນີ້ ເປັນການປະກອບສ່ວນເຂົ້າໃນການເສີມຂະຫຍາຍການຮ່ວມມືທີ່ດີລະຫວ່າງສະພາແຫ່ງຊາດລາວ ກັບ ອົງການກອງປະຊຸມປະທານລັດຖະສະພາສາກົນ ໃຫ້ນັບມື້ນັບໄດ້ຮັບການພັດທະນາເປັນຮູບປະທຳຫຼາຍຂຶ້ນ ແລະ ເພື່ອປຶກສາຫາລືກ່ຽວກັບການຮ່ວມມືໃນອະນາຄົດ ໂດຍສະເພາະວຽກງານສົ່ງເສີມສັນຕິພາບ, ການປ່ຽນແປງດິນຟ້າອາກາດ ແລະ ການພັດທະນາແບບຍືນຍົງໃນພາກພື້ນ; ພ້ອມດຽວກັນນັ້ນ, ທ່ານຮອງປະທານສະພາແຫ່ງຊາດ ຍັງໄດ້ສະແດງຄວາມຊົມເຊີຍຕໍ່ການກະກຽມກອງປະຊຸມປະທານລັດຖະສະພາສາກົນ ຄັ້ງທີ 2 ທີ່ຈະຈັດຂຶ້ນທີ່ນະຄອນຫຼວງພະນົມເປັນ, ລາຊະອານາຈັກກຳປູເຈຍ ພາຍໃຕ້ຫົວຂໍ້ "ຄວາມສາມັກຄີ ເພື່ອສັນຕິພາບ ແລະ ຄວາມຮຸ່ງເຮືອງຮ່ວມກັນ: ການເສີມສ້າງກົດໝາຍສາກົນ ແລະ ການແກ້ໄຂຂໍ້ຂັດແຍ້ງດ້ວຍສັນຕິວິທີ" ເຊິ່ງຫົວຂໍ້ດັ່ງກ່າວໄດ້ສະແດງໃຫ້ເຫັນເຖິງຄວາມຈຳເປັນຂອງຄວາມສາມັກຄີ, ການເຄົາລົບກົດໝາຍສາກົນ ແລະການແກ້ໄຂຄວາມຂັດແຍ້ງໂດຍສັນຕິວິທີ.

ທ່ານເລຂາທິການໃຫຍ່ອົງການກອງປະຊຸມປະທານລັດຖະສະພາສາກົນ ໄດ້ສະແດງຄວາມຂອບໃຈຕໍ່ທ່ານຮອງປະທານສະພາແຫ່ງຊາດ ທີ່ໄດ້ໃຫ້ການຕ້ອນຮັບຢ່າງອົບອຸ່ນ ແລະ ຕີລາຄາສູງຕໍ່ການພົວພັນຮ່ວມມືລະຫວ່າງອົງການ ISC ກັບ ສະພາແຫ່ງຊາດລາວ ພ້ອມທັງແຈ້ງຈຸດປະສົງຂອງການມາຢ້ຽມຢາມ ສປປລາວ ໃນຄັ້ງນີ້ ກໍເພື່ອສົ່ງບັດເຊີນຄະນະຜູ້ແທນສະພາແຫ່ງຊາດລາວ ເຂົ້າຮ່ວມກອງປະຊຸມປະທານລັດຖະສະພາສາກົນ ຄັ້ງທີ 2 ທີ່ຈະຈັດຂຶ້ນໃນເດືອນສິງຫານີ້ ແລະ ຍັງໄດ້ລາຍງານຫຍໍ້ກ່ຽວກັບການຈັດຕັ້ງປະຕິບັດພາລະກິດຕ່າງໆຂອງອົງການໃນໄລຍະຜ່ານມາ ພ້ອມທັງຈະສືບຕໍ່ຊຸກຍູ້ ແລະ ຮ່ວມມືກັບ ສປປລາວ ເວົ້າລວມ, ເວົ້າສະເພາະ ກໍຄືການພົວພັນຮ່ວມມືລະຫວ່າງອົງການ ISC ກັບ ສະພາແຫ່ງຊາດລາວ ໃຫ້ໄດ້ຮັບການພັດທະນາຍິ່ງໆຂຶ້ນ.

## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ເມືອງສູນກາງພັກ, ປະທານສະພາແຫ່ງຊາດ; ເຂົ້າຮ່ວມມີທ່ານ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ, ປະທານປະເທດ; ບັນດາທ່ານການນຳຂັ້ນສູງ ແລະ ອະດີດການນຳຂັ້ນສູງຂອງພັກ-ລັດ, ທ່ານ ສອນໄຊ ສີພັນດອນ ກຳມະການກົມການເມືອງສູນກາງພັກ, ນາຍົກລັດຖະມົນຕີ ແລະ ບັນດາທ່ານສະມາຊິກລັດຖະບານ, ສະມາຊິກສະພາແຫ່ງຊາດ (ສສຊ) ຈາກ 18 ເຂດເລືອກຕັ້ງທົ່ວປະເທດ, ຜູ້ຕາງໜ້າອົງການຈັດຕັ້ງພັກ-ລັດ, ສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ບັນດາຜູ້ຊົງຄຸນວຸດທິ, ສະຖາບັນການສຶກສາ, ຫົວໜ່ວຍທຸລະກິດ, ບັນດາທູຕານຸທູດ ແລະ ຜູ້ຕາງໜ້າອົງການຈັດຕັ້ງສາກົນປະຈຳລາວແລະແຂກຖືກເຊີນ.

ພາຍຫຼັງທ່ານ ໄຊສົມພອນ ພົມວິຫານ ໄດ້ກ່າວສູນທອນພິດເປີດກອງປະຊຸມຢ່າງເປັນທາງການ, ກອງປະຊຸມໄດ້ຮັບຟັງບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ 6 ເດືອນຕົ້ນປີ 2026 ແລະ ທິດທາງແຜນການ 6 ເດືອນທ້າຍປີ 2026 ຈາກທ່ານນາຍົກລັດຖະມົນຕີ; ທ່ານ ວິໄລວົງ ບຸດດາຄຳ ຮອງປະທານສະພາແຫ່ງຊາດ ຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ ກໍໄດ້ປະກອບຄຳເຫັນຕໍ່ບົດລາຍງານດັ່ງກ່າວ; ຈາກນັ້ນ, ປະທານກອງປະຊຸມໄດ້ມີຄຳເຫັນເຈາະຈີ້ມ ທັງໃຫ້ທິດຊີ້ນຳໃນການຄົ້ນຄວ້າປະກອບຄຳເຫັນ, ບັນດາທ່ານ ສສຊ ກໍໄດ້ພ້ອມກັນສຸມໃສ່ຄົ້ນຄວ້າ ແລະ ປະກອບຄຳເຫັນໃສ່ບົດລາຍງານ.

ກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງ ສພຊ ຊຸດທີX ຈະດຳເນີນໄປຈົນຮອດວັນທີ 10 ກໍລະກົດ 2026, ຫ້ອງວ່າການສະພາແຫ່ງຊາດ ໄດ້ຈັດຕັ້ງໜ່ວຍງານເພື່ອຮັບເອົາຄຳຄິດຄຳເຫັນ ແລະ ຄຳສະເໜີໂດຍກົງຈາກປະຊາຊົນທີ່ຈະສົ່ງໄປຍັງກອງປະຊຸມເຊິ່ງສາມາດສົ່ງຕາມວິທີລຸ່ມນີ້:

- ສາຍດ່ວນໝາຍເລກ: 156 (ໃນໂມງລັດຖະການ)
- ອີເມວ: nalao.156@gmail.com
- ແອັປພລິເຄຊັນ: Laona

**(ນາງ ສຸພາວັນ ທອມສະນິດ)**

## ສູນທອນພິດ...

(ຕໍ່ຈາກໜ້າ 1)

ຂຶ້ນຢ່າງເປັນທາງການ ໃນທ່າມກາງບັນຍາກາດທີ່ທົ່ວພັກ, ທົ່ວກອງທັບ, ທົ່ວປວງຊົນລາວທັງຊາດພວມສຸມໃສ່ຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XII ຂອງພັກ, ໂຄງການການເມືອງສະບັບທີ 3, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X ແລະ ມະຕິກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 3 ສະໄໝທີ XII ເຂົ້າໃນທຸກຂົງເຂດວຽກງານ ແລະ ພວມກະກຽມສະເຫຼີມສະຫຼອງວັນລັດຖະທຳມະນູນ ຄົບຮອບ 35 ປີ ຢ່າງເປັນຂະບວນຟົດຟື້ນ.

ໃນໂອກາດທີ່ມີຄວາມໝາຍສຳຄັນນີ້, ກອງປະຊຸມມີຄວາມພາກພູມໃຈ ແລະ ມີຄວາມປິຕິຍິນດີເປັນຢ່າງຍິ່ງ ທີ່ໄດ້ຕ້ອນຮັບທ່ານ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດທີ່ໄດ້ໃຫ້ກຽດເຂົ້າຮ່ວມກອງປະຊຸມໃນຄັ້ງນີ້, ຂໍສະແດງຄວາມຂໍ່ານັບຊົມເຊີຍຢ່າງສຸດອົກສຸດໃຈ; ຂໍສະແດງຄວາມຂໍ່ານັບຊົມເຊີຍແລະຍິນດີຕ້ອນຮັບບັນດາທ່ານການນຳຂັ້ນສູງ ແລະອະດີດການນຳຂັ້ນສູງຂອງພັກ-ລັດ,ບັນດາທ່ານສະມາຊິກລັດຖະບານ, ຜູ້ຕາງໜ້າອົງການຈັດຕັ້ງພັກ-ລັດ, ສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ,ບັນດາຜູ້ຊົງຄຸນວຸດທິ, ສະຖາບັນການສຶກສາ, ຫົວໜ່ວຍທຸລະກິດ, ບັນດາທູຕານຸທູດ ແລະ ຜູ້ຕາງໜ້າອົງການຈັດຕັ້ງສາກົນປະຈຳລາວ ທີ່ໄດ້ໃຫ້ກຽດເຂົ້າຮ່ວມກອງປະຊຸມຄັ້ງນີ້ ຢ່າງສຸດໃຈ; ຂໍສະແດງຄວາມຊົມເຊີຍມາຍັງບັນດາທ່ານສະມາຊິກສະພາແຫ່ງຊາດ ໃນຖານະທີ່ເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ ໃນຂອບເຂດທົ່ວປະເທດ ທີ່ໄດ້ມາເຂົ້າຮ່ວມກອງປະຊຸມຄັ້ງນີ້ຢ່າງພ້ອມພຽງ.

ໃນຕົ້ນປີ 2026, ສປປລາວ ໄດ້ມີຫຼາຍເຫດການສຳຄັນ: ພັກປະຊາຊົນປະຕິວັດລາວ ໄດ້ສຳເລັດການດຳເນີນກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ແລະ ໄດ້ດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດຊຸດທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດທີ V ດ້ວຍຜົນສຳເລັດອັນຈົບງາມ ກ້າວໄປເຖິງການດຳເນີນກອງປະຊຸມຄັ້ງປະຖົມມະລືກຂອງສະພາແຫ່ງຊາດ ໃນທ້າຍເດືອນມີນາຜ່ານມາ ດ້ວຍການພິຈາລະນາຮັບຮອງເອົາການເລືອກຕັ້ງການນຳຊຸດໃໝ່ຂອງສະພາແຫ່ງຊາດ, ລັດຖະບານ, ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ, ອົງການກວດກາແຫ່ງລັດ, ອົງການກວດສອບແຫ່ງລັດ; ຮອງຮັບເອົາແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X, ທິດທາງແຜນການວຽກງານ 5 ປີ ຂອງອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ, ອົງການກວດກາແຫ່ງລັດ, ອົງການກວດສອບແຫ່ງລັດ ທັງໄດ້ມີການຮັບຮອງເອົາແຜນການສ້າງ ແລະ ປັບປຸງກົດໝາຍ ໄລຍະ 5 ປີຕໍ່ໜ້າ ແລະ ວຽກງານການເຄື່ອນໄຫວຂອງສະພາແຫ່ງຊາດຊຸດທີ X.

ພັກ, ລັດ ສປປລາວ ຍາມໃດກໍຖືການພັດທະນາເສດຖະກິດເປັນໃຈກາງ, ຖືສຳຄັນການຍົກສູງຊີວິດການເປັນຢູ່ຂອງປະຊາຊົນໃຫ້ນັບມື້ນັບດີຂຶ້ນເພື່ອສາມາດນຳເອົາປະເທດເຮົາອອກສູ່ສະພາບດ້ອຍພັດທະນາໃນປີ 2026 ນີ້.

ດ້ວຍຄວາມມຸ່ງໝັ້ນໃນການພັດທະນາປະເທດເຮົາ ໃຫ້ມີຄວາມໜັກແໜ້ນຕາມທິດປະຊາຊົນຮັ່ງມີ, ປະເທດຊາດມັ່ງຄັ່ງ, ເຂັ້ມແຂງ, ສັງຄົມມີປະຊາທິປະໄຕ, ສາມັກຄີປອງດອງ, ຍຸຕິທຳ ແລະ ສີວິໄລ ແລະ ຕາມຄາດໝາຍສູ້ຊົນທີ່ໄດ້ລະບຸໃນໂຄງການການເມືອງສະບັບທີ 3 ທີ່ລະບຸໄວ້ວ່າ: ຮອດປີ 2055 ປະເທດເຮົາເປັນປະເທດມີລາຍຮັບປານກາງທາສູງ ແລະ ສ້າງລັດປະຊາທິປະໄຕປະຊາຊົນປົກຄອງດ້ວຍກົດໝາຍ; ບົນພື້ນຖານຈິດໃຈດັ່ງກ່າວ ແລະ ໂດຍສືບຕໍ່ການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ທີ່ດຳເນີນມາແຕ່ປີ 2021-2025 ຜ່ານມານັ້ນ, ພັກ, ລັດຖະບານຈຶ່ງໄດ້ສະເໜີໃຫ້ມີການຮັບຮອງເອົາວາລະແຫ່ງຊາດວ່າດ້ວຍການພັດທະນາຊົນນະບົດ ແລະແກ້ໄຂຄວາມທຸກຍາກຂອງປະຊາຊົນ ເຊິ່ງເປັນເປົ້າໝາຍຕົ້ນຕໍຂອງກອງປະຊຸມສະໄໝວິສາມັນເທື່ອທີ 1 ໃນຄັ້ງນີ້.

ການດຳເນີນກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດ ຊຸດທີ X ໃນຄັ້ງນີ້ ດ້ານໜຶ່ງກໍເປັນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງສະພາແຫ່ງຊາດຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ, ອີກດ້ານໜຶ່ງ ກໍເປັນຄວາມພະຍາຍາມ ແລະ ຄວາມເອົາໃຈໃສ່ຂອງສະພາແຫ່ງຊາດ ຂອງລັດຖະບານໃນການຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍປ່ຽນແປງໃໝ່ຂອງພັກໂດຍສະເພາະແມ່ນມະຕິຂອງກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ໃຫ້ເປັນອັນລະອຽດເຊິ່ງສະແດງອອກໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X ເພື່ອສືບຕໍ່ສ້າງໃຫ້ປະເທດເຮົາມີການພັດທະນາຕາມທິດສີຂຽວ ແລະ ຍືນຍົງ ແລະ ສູ້ຊົນໃຫ້ການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍ ມີປະສິດທິພາບປະສິທິຜົນສູງຂຶ້ນເລື້ອຍໆ.

ກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດ ຊຸດທີ X ຄັ້ງນີ້ ຈະໄດ້ພິຈາລະນາຮັບຮອງບັນຫາສຳຄັນພື້ນຖານຂອງປະເທດຊາດ ດັ່ງນີ້:

1. ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ 6 ເດືອນຕົ້ນປີ 2026 ແລະ ທິດທາງແຜນການ 6 ເດືອນທ້າຍປີ 2026;

2. ພິຈາລະນາ ແລະ ຮັບຮອງເອົາວາລະແຫ່ງຊາດ ວ່າດ້ວຍການພັດທະນາຊົນນະບົດ ແລະແກ້ໄຂຄວາມທຸກຍາກຂອງປະຊາຊົນ;

3. ພິຈາລະນາ ແລະ ຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍ ຈຳນວນ 2 ສະບັບ ຄື: (1) ກົດໝາຍວ່າດ້ວຍຄັງເງິນແຫ່ງລັດ(ສະບັບສ້າງໃໝ່), (2) ກົດໝາຍວ່າດ້ວຍງົບປະມານແຫ່ງລັດ (ສະບັບປັບປຸງ).

ກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດ ຊຸດທີ X ຄັ້ງນີ້ ຈະໄດ້ພິຈາລະນາຮັບຮອງບັນຫາທີ່ສຳຄັນ, ຈຳເປັນ ຕິດພັນກັບວາລະແຫ່ງຊາດວ່າດ້ວຍການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ. ສະນັ້ນ, ຂ້າພະເຈົ້າຂໍຮຽກຮ້ອງມາຍັງບັນດາທ່ານສະມາຊິກສະພາແຫ່ງຊາດ ຈົ່ງພ້ອມກັນຍົກສູງຄວາມຮັບຜິດຊອບການເມືອງຂອງຕົນ, ສຸມທຸກສະຕິປັນຍາ, ຄວາມຮູ້ຄວາມສາມາດ ເຂົ້າໃນການຄົ້ນຄວ້າ, ພິຈາລະນາ ແລະ ປະກອບຄຳເຫັນຢ່າງມີປະຊາທິປະໄຕ ແລະ ກົງໄປກົງມາ, ສ້າງສັນ ຮັບປະກັນຄວາມຖືກຕ້ອງຕາມກົດໝາຍ ກ້າວໄປເຖິງການຕົກລົງ ແລະ ຮັບຮອງບັນດາເນື້ອໃນທີ່ນຳມາພິຈາລະນາໃນກອງປະຊຸມຄັ້ງນີ້ ໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້.

ຮຽກຮ້ອງມາຍັງສະມາຊິກລັດຖະບານ, ຜູ້ຕາງໜ້າອົງການຈັດຕັ້ງພັກ-ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງໄດ້ເຂົ້າຮ່ວມກອງປະຊຸມຄັ້ງນີ້ຕາມວະລາທີ່ໄດ້ກຳນົດໄວ້, ພ້ອມທັງຮຽກຮ້ອງມາຍັງປະຊາຊົນບັນດາເຜົ່າ ຈົ່ງໄດ້ຕິດຕາມການດຳເນີນກອງປະຊຸມໂດຍຜ່ານພາຫະນະສື່ມວນຊົນ.

ນະໂອກາດທີ່ມີຄວາມໝາຍສຳຄັນນີ້, ໃນນາມປະທານກອງປະຊຸມ, ຂ້າພະເຈົ້າ ຂໍປະກາດເປີດກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດ ຊຸດທີ X ນັບແຕ່ເວລານີ້ເປັນຕົ້ນໄປ.

## ສັງລວມ...

(ຕໍ່ຈາກໜ້າ 1)

ການປະຕິບັດລາຍຈ່າຍ, ການແກ້ໄຂໜີ້ສິນ ແລະ ຮັບປະກັນການຈັດສັນງົບປະມານ ໃຫ້ສອດຄ່ອງ ແລະ ກົມກຽວກັນໃນທຸກຂະແໜງການ ພ້ອມທັງເອົາໃຈໃສ່ບາງບັນຫາດັ່ງນີ້:

**ຕໍ່ພາກແຜນງົບປະມານແຫ່ງລັດ:**

- ການຫັນເປັນທັນສະໄໝໃນການເກັບລາຍຮັບໃຫ້ມີຈຸດສຸມ ແລະ ມີຄຸນນະພາບສູງ ຕ້ອງໄດ້ເອົາໃຈໃສ່ພັດທະນາ ແລະ ນຳໃຊ້ລະບົບທັນສະໄໝໃຫ້ທົ່ວເຖິງຢູ່ບັນດາດ່ານສາກົນ, ຫົວໜ່ວຍທຸລະກິດຕ່າງໆ ໂດຍສະເພາະໂຄງການຂຸດຄົ້ນແຮ່ທາດ, ໂຄງການພະລັງງານເນື່ອງຈາກເປັນແຫຼ່ງລາຍຮັບທີ່ສູງ ເພື່ອຈຳກັດບໍ່ໃຫ້ລາຍຮັບມີການຮົ່ວໄຫຼ; ບັນຫາດັ່ງກ່າວ ຄວນຈະມີການສ້າງຕັ້ງຄະນະສະເພາະກິດ ເພື່ອຄຸ້ມຄອງ ແລະ ຕິດຕາມ ເພື່ອບໍ່ໃຫ້ຊັບສິນບັດຂອງຊາດຕົກເຮ່ຍເສຍຫາຍຫຼາຍ.

- ກວດກາຄືນ ແລະ ເອົາໃຈໃສ່ປະຕິບັດການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ ເພື່ອໃຫ້ສາມາດເປັນປະເທດກຸ້ມຕົນເອງ ແລະ ສາມາດເກັບລາຍຮັບເຂົ້າງົບປະມານແຫ່ງລັດໃຫ້ຫຼາຍຂຶ້ນ, ທ້ອງຖິ່ນມີບົດບາດໃນການພັດທະນາຕົນເອງໄດ້ໃນການລະດົມທຶນເພື່ອກໍ່ສ້າງເສັ້ນທາງດ້ວຍຕົນເອງ.

- ກວດກາ ແລະ ພິຈາລະນາຄືນ ກ່ຽວກັບການແບ່ງຂັ້ນຄຸ້ມຄອງການເກັບລາຍຮັບ-ລາຍຈ່າຍ ແລະ ການດຸ່ນດ່ຽງ ໂດຍສະເພາະການນຳໃຊ້ເງິນເກີນແຜນໃຫ້ທ້ອງຖິ່ນ ເພາະມີບາງແຂວງສາມາດປະຕິບັດລາຍຮັບງົບປະມານເກີນແຜນຢ່າງຫຼວງຫຼາຍ.

- ການເກັບລາຍຮັບຈາກທີ່ດິນ, ການຂຶ້ນສຳມະໂນທີ່ດິນ, ອາກອນຈາກການກໍ່ສ້າງ ເຫັນວ່າຜ່ານມາຍັງບໍ່ສາມາດປະຕິບັດໄດ້ດີເທົ່າຄວນ ເຮັດໃຫ້ມີການສູນເສຍລາຍຮັບຫຼາຍສົມຄວນ, ສະເໜີໃຫ້ຄົ້ນຄວ້າອອກນິຕິກຳໃຫ້ລະອຽດ, ຊັດເຈນ ແລະ ຫັນເປັນທັນສະໄໝ.

- ພິຈາລະນາກ່ຽວກັບການນຳໃຊ້ເງິນເກີນແຜນຂອງແຂວງຕ່າງໆໃຫ້ເໝາະສົມ, ຜ່ານມາກໍມີນິຕິກຳໃຫ້ແຂວງກຳນົດນະໂຍບາຍການນຳໃຊ້ງົບປະມານ 50% ເຊິ່ງບໍ່ສາມາດບຸກທະລຸໃນການພັດທະນາແຂວງໄດ້ ຈຶ່ງສະເໜີໃຫ້ແຂວງໄດ້ນຳໃຊ້ເງິນດັ່ງກ່າວໃຫ້ທ້ອງຖິ່ນໃນສັດສ່ວນ 70/30 ຫຼື 80/20 ເພື່ອໃຫ້ແຂວງນຳເຂົ້າພັດທະນາທ້ອງຖິ່ນ ເປັນຕົ້ນ ການກໍ່ສ້າງ ແລະ ບູລະນະເສັ້ນທາງຂອງທ້ອງຖິ່ນ.

**ແຜນເງິນຕາ:**

-ການແກ້ໄຂໄພເງິນເຟີ້, ອັດຕາແລກປ່ຽນ ແລະ ບັນຫາເງິນກີບອ່ອນຄ່າ ເຊິ່ງສົ່ງຜົນກະທົບຕໍ່ການຜະລິດພາຍໃນ, ສະເໜີໃຫ້ມີມາດຕະການຄຸ້ມຄອງ ແລະ ປະຕິບັດໃຫ້ຖືກຕ້ອງຕາມກົດໝາຍຢ່າງເຂັ້ມງວດ.

- ຄົ້ນຄວ້າສ້າງເງື່ອນໄຂອຳນວຍຄວາມສະດວກດ້ານຕ່າງໆ ໃຫ້ແກ່ການນຳເຂົ້າທຶນ, ສົ່ງອອກສິນຄ້າ ໂດຍຜ່ານລະບົບທະນາຄານ.

- ການຈັດສັນງົບປະມານບ້ວງກອງທຶນທາງທີ່ລັດຖະບານມອບໃຫ້ທ້ອງຖິ່ນຄຸ້ມຄອງ, ເຫັນວ່າໃນປີ 2027 ທີ່ຈະເອົາໜີ້ສິນບ້ວງກອງທຶນໃຫ້ເຂົ້າໃນແຜນປົກກະຕິ ເຊິ່ງຈະເຮັດໃຫ້ແຜນໜີ້ສິນຂອງແຂວງເພີ່ມຂຶ້ນ.

**ຂົງເຂດເສດຖະກິດ:**

- ຕໍ່ກັບວຽກງານການເຊື່ອມໂຍງ-ເຊື່ອມຈອດ, ສະເໜີໃຫ້ພິຈາລະນາຈັດສັນງົບປະມານເພື່ອສຸມໃສ່ການກໍ່ສ້າງແລະບູລະນະສ້ອມແປງທາງຫຼວງແຫ່ງຊາດທີ່ເປ່ເພຢ່າງໜັກ ເຊິ່ງສ້າງຄວາມຫຍຸ້ງຍາກໃຫ້ແກ່ການສັນຈອນ ແລະ ການຂົນສົ່ງສິນຄ້າ ໂດຍສະເພາະແມ່ນທາງຫຼວງແຫ່ງຊາດເລກທີ 13 ເໜືອ (ເຂດເມືອງໂພນໂຮງ ຫາ ເມືອງວັງວຽງ ແຂວງວຽງຈັນ ຫຼື ວຽງຈັນ-ຊຽງຂວາງ) ພ້ອມທັງມີການກຳນົດນະໂຍບາຍສົ່ງເສີມໃຫ້ປະຊາຊົນມີສ່ວນຮ່ວມໃນການພັດທະນາ ແລະ ບູລະນະເສັ້ນ ທາງຮ່ອມ-ທາງຊອຍພາຍໃນບ້ານ; ນອກຈາກນີ້, ໃຫ້ຮີບຮ້ອນກວດກາຄືນບັນດາໂຄງການກໍ່ສ້າງ-ສ້ອມແປງທາງທີ່ໄດ້ເຊັນສັນຍາແລ້ວ ແຕ່ບໍ່ມີຄວາມຄືບໜ້າ, ຫາກພົບວ່າບໍ່ສາມາດຈັດຕັ້ງປະຕິບັດໄດ້ ກໍສະເໜີໃຫ້ຍົກເລີກສັນຍາ ແລ້ວເປີດປະມູນຄັດເລືອກຜູ້ຮັບເໝົາໃໝ່ທີ່ມີຄວາມພ້ອມ ເພື່ອເລັ່ງແກ້ໄຂບັນຫາບໍ່ໃຫ້ການກໍ່ສ້າງຊັກຊ້າ ແລະ ສົ່ງຜົນໃຫ້ເສັ້ນທາງເປ່ເພໜັກກວ່າເກົ່າ.

-ກ່ຽວກັບການຄຸ້ມຄອງລົດບັນທຸກສິນຄ້າເກີນກຳນົດ, ສະເໜີໃຫ້ເພີ່ມທະວີຄວາມເຂັ້ມງວດໃນການກວດກາ ແລະ ປະຕິບັດມາດຕະການທາງກົດໝາຍຢ່າງເດັດຂາດຕໍ່ພາຫະນະທີ່ບັນທຸກເກີນນ້ຳໜັກ ເຊິ່ງເປັນສາເຫດຕົ້ນຕໍເຮັດໃຫ້ພື້ນຖານໂຄງລ່າງທາງຄົມມະນາຄົມເປ່ເພຊຸດໂຊມຢ່າງໜັກ; ເພື່ອແກ້ໄຂບັນຫານີ້ຢ່າງຍືນຍົງ, ສະເໜີໃຫ້ພັດທະນາແລະຫັນປ່ຽນລະບົບຄຸ້ມຄອງ ໄປສູ່ເຕັກໂນໂລຊີດີຈີຕອນທີ່ທັນສະໄໝ ໂດຍການເຊື່ອມໂຍງຖານຂໍ້ມູນຈາກສະຖານີຊັ່ງນ້ຳໜັກທົ່ວປະເທດ ກ້າວໄປສູ່ການນຳໃຊ້ລະບົບທັນສະໄໝຂອງຂະແໜງການສູນກາງເພື່ອສ້າງຄວາມໂປ່ງໃສ, ຕ້ານປາກົດການຫຍໍ້ທໍ້ ແລະ ປ້ອງກັນການຮົ່ວໄຫຼຂອງລາຍຮັບງົບປະມານ.

- ສືບຕໍ່ແກ້ໄຂພື້ນຖານໂຄງລ່າງເປັນຕົ້ນເສັ້ນທາງຫຼວງແຫ່ງຊາດ ແລະ ທາງຫຼວງທ້ອງຖິ່ນ ໃຫ້ສາມາດທຽວໄດ້ຕະຫຼອດປີ.

- ຕໍ່ກັບໂຄງການການຕ້ານແລ້ງຕ້ານຖ້ວມ, ລັດຖະບານມີມາດຕະການແນວໃດເພື່ອສະໜອງແນວພັນໃຫ້ແກ່ປະຊາຊົນ, ມີນະໂຍບາຍຊຸກຍູ້ສົ່ງເສີມ ແລະ ສະໜອງແນວພັນພືດ, ແນວພັນເຂົ້າ, ຕົ້ນທຶນການຜະລິດສູງຫຼາຍ ສະເໜີລັດຖະບານສົມທົບກັບບັນດາແຂວງເພື່ອມີມາດຕະການ ຫຼື ມີນະໂຍບາຍຊຸກຍູ້ສົ່ງເສີມ; ສືບຕໍ່ຊຸກຍູ້ສົ່ງເສີມການລົງທຶນພາຍໃນແລະຕ່າງປະເທດ ໃນຂະແໜງການຕ່າງໆຢ່າງມີຈຸດສຸມ ແລະ ມີທ່າແຮງ ໂດຍສະເພາະການຜະລິດກະສິກຳເພື່ອຮັບປະກັນການຄໍ້າປະກັນສະບຽງອາຫານ, ການປຸງແຕ່ງຜະລິດຕະພັນກະສິກຳແລະອຸດສາຫະກຳ ເພື່ອທົດແທນການນຳເຂົ້າ, ສ້າງມູນຄ່າເພີ່ມເປັນສິນຄ້າສົ່ງອອກໃຫ້ມີຄວາມຫຼາກຫຼາຍ ແລະ ເພີ່ມຜົນຜະລິດທີ່ມີຄຸນນະພາບ, ຫຼຸດຜ່ອນການສົ່ງອອກເປັນວັດຖຸດິບ ແລະ ນຳໃຊ້ມາດຕະການທີ່ບໍ່ແມ່ນພາສີ-ອາກອນ ຕໍ່ການນຳເຂົ້າ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ການຜະລິດພາຍໃນປະເທດ ສາມາດແຂ່ງຂັນກັບສາກົນໄດ້.

---

### ອາດ ກະວີລາວ

## ເຫັນໂຕແກ່ ຈະບໍ່ແກ່ໂຕ

# ດອກຜັກຂະ

❊ ໃນສູດທຳກ່າວໄວ້
ທຮຽມຈຶ່ງນຳມາເຜີຍ
ບໍ່ແມ່ນແປງຄຳເວົ້າ
ສັງຂານຂັນທາດນັ້ນ

❊ ອາຍຸການຂວບເຂົ້າ
ອັນວ່າກຳລັງວັງຊາ
ປະສົບການພູນເພີ້ມ
ການໄປມາບໍ່ຄ່ອງແຄ້ວ

❊ ທຸກສະຖານທີ່ຕັ້ງ
ລະບຽບການມີວາງ
ຕາມກົນໄກໄຂຊີ້
ຂວບກະສຽນຮອດແລ້ວ

❊ ໝາຍວ່າ ວຽກໃຫຍ່ນ້ອຍ
ຜູ້ເຫື່ອແຮງຍັງມີ
ປົງປ່ອຍວ່າງບໍ່ຂືນດື້
ບໍ່ຝືນຂັດງັດຂໍ້

❊ ຮູ້ຕົນເອງທ່ອງແທ້
ປະໂຫຍດລວມແລຫຼີງ
ບໍ່ຄິດແຄງແປງປັ້ນ
ບໍ່ຝືນທຳມະຊາດສ້າງ

❊ ຕົນເບິ່ງຕົນອອກໄດ້
ບໍ່ຂືນກົດຫັກໂຫມ
ເຫັນວ່າສັງຂານຂ້ອນ
ກໍພັກຜ່ອນເພື່ອໃຫ້

ຈົ່ງຄັກສັດຈະທຳ ພີ່ນ້ອງເອີຍ!
ເພື່ອວິຈານຈິງແຈ້ງ
ຄວນຄຶດອງປູາດ
ບໍ່ຄຶງໝັ້ນແກ່ນແຂງ

ປາຍພາກຖຸງກະສຽນ ມາແລ້ວ
ບໍ່ຄືຄາວກີ້
ແຕ່ຖືດຖອຍສະມັດຖະພາບ
ຄືກີ້ເກົ່າຫຼັງ ໜຸ່ມພຸ້ນ

ພາກລັດ-ເອກະຊົນ ທຳງານນັ້ນ!
ບົ່ງມະຕິເກນໄວ້
ລະບຽບການກຳນົດ
ກຽມເຂົ້າສູ່ບຳນານ ຫັ້ນນາ!

ຄົນໃໝ່ມາແທນ
ສືບເສີມຂະຫຍາຍສ້າງ
ຕາມກົດ ຕາມລະບຽບ
ເມທີເຊື້ອປູາດຍໍ ຍ້ອງແລ້ວ!

ບໍ່ເຫັນແກ່ຕົວຕົນ
ຈາກໃຈຈິງແຈ້ງ
ມໍມັງຫ້າວຮື່ນ
ວາງໄວ້ແວ່ນໃຈ

ຊາຊັ່ງແຮງມີ ຕົນນັ້ນ
ຂົ່ມຕົນເກີນນັ້ນ
ໜັງຍານແຂ້ວຫຼ່ອນ
ເຂົາພຸ້ນສືບແທນ ຫັ້ນແລ້ວ!

---



## ຫົກຫາຍ ລະບາຍ

(ເລື່ອງເບົາໆ ເອົ້າແບບກັບເອງ ບໍ່ເຄັ່ງພິທີການ)

# ສຽມທ້ຽນ

❊ **ຈົ່ມ**ເຊີຍອັບຄ້າຍອັບເກີດປະທານ **ສຸພານຸວົງ** ທີ່ໄດ້ມາບັນຈົບຄົບຮອບ **117 ປີ (13 ກໍລະກົດ 1909-13 ກໍລະກົດ 2026)** ເຖິງແມ່ນທ່ານລັບຫ່າງແລ້ວ ສະຖິດຢູ່ເມືອງສະຫວັນ ແຕ່ອາພົນງານຍັງ ໂດ່ງດັງເກັບໄວ້ ໃຫ້ລູກຫຼານເຫຼັນຫຼອນ ມອບຊົນສືບເນື່ອງ ກະທ່ຳດັ່ງດ້ານ ລຸງສ້າງສືບມາ **ນັ້ນແລ້ວ!**

❊ **ພາຍ**ຫຼັງກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດ ຊຸດທີ X ເສັດສິ້ນລົງ ຕໍ່ໄປຄົງໜັກໜ້າ ທາງສະພາປະຊາຊົນແຂວງທົ່ວປະເທດ ສສຂ ຝ່າຍເບື້ອງ ກະກຽມພ້ອມເຄື່ອນໄຫວ ຂໍເປັນກຳລັງໃຈໃຫ້ ສສຊ-ສສຂ ໝົດທຸກທ່ານ ປະຕິບັດວຽກງານຈົ່ງສຳເລັດລາບລື້ນ ປະຊາຫຸ້ມຮັກຫອມ **ທ່ານເອີຍ!**

## ຊອບຍິ້ມ

# ພົ້ງລົ້ງ

### ເລື່ອງ: ພູມໃຈ

ຂ້ອນແລ້ງຄືນໜຶ່ງ, ລູກຊາຍອາຍຸ 10 ປີ ແລ່ນມາເຄາະປະຕູຫ້ອງນອນພໍ່ຢ່າງຟ້າວຟັ່ງ

**ລູກຊາຍ:** ພໍ່ໆ ມີຄົນລັກລົດເຮົາໄປ

ພໍ່ສະເດີດຕື່ນ ແລ້ວລົງມາເບິ່ງລົດກໍບໍ່ເຫັນອີຫຼີ, ຈຶ່ງຖາມລູກໄປວ່າ:

**ພໍ່:** ລູກເຫັນໜ້າຄົນລັກລົດເຮົາບໍ່?

**ລູກຊາຍ:** ບໍ່! ລູກບໍ່ເຫັນ ແຕ່ລູກໄດ້ຈັບທີ່ດີກວ່ານັ້ນ

**ພໍ່:** ລູກໄດ້ຫຍັງ?

**ລູກຊາຍ:** ລູກໄດ້ຈົດປ້າຍລົດ ຄັນທີ່ພວກມັນລັກໄດ້, ລູກຊາຍຕອບຢ່າງພູມໃຈ

**ພໍ່:** ???



## ສຸພາສິດ-ຄະຕິເຕືອນໃຈ

# ດອກຫຍ້າ

"ຢ່າໄດ້ເກັບດອກຫອ້ານ ບ້ານເພີ່ນມາຊົມ
ໃຫ້ເຈົ້າຈອຍຊາບ ເກັບ ດອກກະຈຽວແຄມຮົ້ວ"




# ສະພາ Hungary ລົງມະຕິຍົກເລີກສຳນັກງານປົກປ້ອງອະທິປະໄຕ



(Xinhua) - ວັນອັງຄານທີ 30 ມິຖຸນານີ້, ສະພາແຫ່ງຊາດຮົງກາລີ ໄດ້ອະນຸມັດຮ່າງກົດໝາຍເພື່ອຍົກເລີກສຳນັກງານປົກປ້ອງອະທິປະໄຕ (Sovereignty Protection Office - SPO) ໂດຍມີສະມາຊິກສະພາ 135 ຄົນ ລົງຄະແນນສຽງເຫັນດີ, 44 ຄົນ ຄັດຄ້ານ ແລະ 6 ຄົນ ງົດອອກສຽງ (ມີທັງໝົດ 199 ທີ່ນັ່ງ).

ການຍົກເລີກສຳນັກງານນີ້ເຊິ່ງສ້າງຕັ້ງຂຶ້ນໃນສະໄໝລັດຖະບານຂອງອະດີດນາຍົກລັດຖະມົນຕີ ວິກເຕີ ອໍບານ (Viktor Orban) ເປັນຄຳໝັ້ນສັນຍາສຳຄັນໃນການໂຄສະນາຫາສຽງຂອງພັກ Tisza ຫຼື ພັກເຄົາລົບ ແລະ ເສລີພາບ (Respect and Freedom) ກ່ອນເຂົ້າຮັບຕຳແໜ່ງໃນຕົ້ນປີນີ້, ກົດໝາຍຈະມີຜົນບັງຄັບໃຊ້ 15 ວັນ ຫຼັງຈາກປະກາດໃຊ້.

ຕາມກົດໝາຍ, ສຳນັກງານປົກປ້ອງອະທິປະໄຕ "ບໍ່ໄດ້ປະຕິບັດໜ້າທີ່ສາທາລະນະໃດໆຢ່າງແທ້ຈິງ" ແລະ ການສ້າງຕັ້ງເປັນພຽງການຮັບໃຊ້ "ເຈດຕະນາແລະຜົນປະໂຫຍດທາງການເມືອງ" ເທົ່ານັ້ນ. ສຳນັກງານນີ້ເຊິ່ງເລີ່ມດຳເນີນງານໃນວັນທີ 1 ກຸມພາ 2024 ຈະຖືກຍຸບ ແລະ ຊັບສິນຈະຖືກໂອນໄປໃຫ້ກະຊວງຍຸຕິທຳ; ເຖິງຢ່າງ ໃດກໍຕາມ, ພາຍໃຕ້ກົດໝາຍໃໝ່, ກະຊວງຈະບໍ່ຮັບຊ່ວງຕໍ່ ຫຼື ປະຕິບັດໜ້າທີ່ເດີມຂອງສຳນັກງານນີ້.

ວາລະຂອງປະທານແລະຮອງປະທານສຳນັກງານ ຈະສິ້ນສຸດລົງເມື່ອກົດໝາຍມີຜົນບັງຄັບໃຊ້, ພະນັກງານຂອງສຳນັກງານຈະຖືກເລີກຈ້າງພ້ອມເງິນຊົດເຊີຍຕາມກົດໝາຍວ່າດ້ວຍລັດຖະກອນ.

ການເຄື່ອນໄຫວນີ້ເກີດຂຶ້ນຫຼັງຈາກສະພາແຫ່ງຊາດໄດ້ຮັບຮອງການປັບປຸງລັດຖະທຳມະນູນຄັ້ງທີ 16 ເມື່ອວັນທີ 15 ມິຖຸນາຜ່ານມາ, ເຊິ່ງໄດ້ຍົກເລີກບົດບັນຍັດໃນລັດຖະທຳມະນູນທີ່ສ້າງຕັ້ງສຳນັກງານນີ້ ເປີດທາງໃຫ້ແກ່ການຍຸບສຳນັກງານຕາມກົດໝາຍ.

SPO ສ້າງຕັ້ງຂຶ້ນພາຍໃຕ້ກົດໝາຍທີ່ຜ່ານການອະນຸມັດໃນທ້າຍປີ 2023 ໂດຍມີເປົ້າໝາຍທີ່ລະບຸໄວ້ຄື ການປົກປ້ອງອະທິປະໄຕແຫ່ງຊາດຮົງກາລີ ຈາກການແຊກແຊງທາງການເມືອງຈາກຕ່າງປະເທດ.

# Mongolia ຫ້າມເດັກອາຍຸຕ່ຳກວ່າ 18 ປີ ຂີ່ສະກູດເຕີ, ລົດຈັກນ້ອຍ ແລະ ລົດຖີບໄຟຟ້າ

(Xinhua) - ການປັບປຸງກົດໝາຍຄວາມປອດໄພທາງຈະລາຈອນຂອງມົງໂກລີ ທີ່ຫ້າມເດັກອາຍຸຕ່ຳກວ່າ 18 ປີ ຂີ່ລົດຈັກນ້ອຍ, ສະກູດເຕີໄຟຟ້າ, ລົດຖີບໄຟຟ້າ, ລົດຈັກອອຟໂຣດໄຟຟ້າ ແລະ ພາຫະນະໄຟຟ້າຂະໜາດນ້ອຍອື່ນໆທີ່ຄ້າຍຄືກັນ ໄດ້ມີຜົນບັງຄັບໃຊ້ໃນວັນພຸດທີ 1 ກໍລະກົດນີ້.



ພາຍໃຕ້ກົດໝາຍທີ່ປັບປຸງໃໝ່, ຫາກພົບເຫັນຜູ້ເຍົາກຳລັງຂັບຂີ່ລົດຈັກນ້ອຍ, ລວມທັງສະກູດເຕີໄຟຟ້າ, ລົດຖີບໄຟຟ້າ ຫຼືພາຫະນະອື່ນໆທີ່ມີລັກສະນະຄ້າຍຄືກັນ, ຜູ້ປົກຄອງ ຫຼື ຜູ້ດູແລເດັກຕາມກົດໝາຍ, ເຊັ່ນ ດຽວກັນກັບທຸ ລະກິດ ຫຼື ບຸກຄົນທີ່ຮັບຜິດຊອບໃນການສະໜອງ ຫຼື ໃຫ້ເຊົ່າຍານພາຫະນະນັ້ນ ຈະຕ້ອງຮັບຜິດຊອບຕາມກົດໝາຍ.

ກະຊວງຄົມມະນາຄົມ ແລະ ຂົນສົ່ງ ລະບຸວ່າ ອຸບັດເຫດຈະລາຈອນທີ່ກ່ຽວຂ້ອງກັບສະກູດເຕີໄຟຟ້າ, ລົດຖີບໄຟຟ້າ ແລະ ລົດຈັກອອຟໂຣດໄຟຟ້າ ໄດ້ເພີ່ມຂຶ້ນສີ່ຫາຫ້າເທົ່າໃນສອງປີຜ່ານມາ, ເຮັດໃຫ້ຕ້ອງມີການອອກກົດລະບຽບທີ່ເຂັ້ມງວດຂຶ້ນ; ກະຊວງກ່າວວ່າ ໃນປີ 2024 ມີອຸບັດເຫດທາງຈະລາຈອນທີ່ກ່ຽວຂ້ອງກັບສະກູດເຕີໄຟຟ້າ, ລົດຈັກນ້ອຍ, ລົດຖີບໄຟຟ້າ ແລະ ລົດຈັກອອຟໂຣດໄຟຟ້າ ເກີດຂຶ້ນທົ່ວປະເທດ 532 ຄັ້ງ, ເຮັດໃຫ້ມີຜູ້ເສຍຊີວິດສາມຄົນ ໂດຍ 95% ຂອງອຸບັດເຫດເຫຼົ່ານີ້ ເກີດຂຶ້ນຂະນະທີ່ຜູ້ຂັບຂີ່ບໍ່ໄດ້ໃສ່ໝວກກັນກະທົບ ຫຼື ອຸປະກອນປ້ອງກັນອື່ນໆ.

# ເວທີປຶກສາຫາລືການຮ່ວມມືທາງກົດໝາຍ ແອັດສະປາຍ-ຈີນ ຄັ້ງທີ 1




(Xinhua) - ເວທີປຶກສາຫາລືການຮ່ວມມືທາງກົດໝາຍ ລະຫວ່າງ ແອັດສະປາຍ-ຈີນ ຄັ້ງທີ 1 ໄດ້ມີຜູ້ແທນຫຼາຍກວ່າ 100 ຄົນ ຈາກຂະແໜງການເມືອງ, ກົດໝາຍ, ການບັງຄັບໃຊ້ກົດໝາຍ, ແລະ ວິຊາການຂອງຈີນແລະແອັດສະປາຍເຂົ້າຮ່ວມເພື່ອປຶກສາຫາລືກ່ຽວກັບກົດໝາຍການເຂົ້າເມືອງ, ການຮ່ວມມືທາງກົດໝາຍສອງຝ່າຍ, ແລະ ຄວາມພະຍາຍາມໃນການຕ້ານການສໍ້ໂກງ ແລະ ອາຊະຍາກຳຈາກຄວາມກຽດຊັງ.

ລະຫວ່າງການປະຊຸມເຊິ່ງຈັດຂຶ້ນເມື່ອວັນຈັນທີ 29 ມິຖຸນານີ້ ທີ່ສະພາຜູ້ແທນລາດສະດອນໃນນະຄອນ ຫຼວງມາດຣິດ, ນາງ ເອວມາ ຊາອິຊ ເດວກາໂດ(Elma Saiz Delgado) ລັດຖະມົນຕີກະຊວງການລວມກຸ່ມທາງສັງຄົມ, ຄວາມໝັ້ນຄົງທາງສັງຄົມ ແລະ ການຍ້າຍຖິ່ນຖານ ຂອງແອັດສະປາຍ ກ່າວຜ່ານວິດີໂອວ່າ ໂຄງການລິເລີ່ມນີ້ ຈະຊ່ວຍປົກປ້ອງສິດຂອງຜູ້ອົບພະຍົບ, ສົ່ງເສີມການເຊື່ອມໂຍງທາງສັງຄົມ ແລະ ສ້າງສັງຄົມທີ່ກວມລວມຫຼາຍຂຶ້ນ.

ສູ ຊຸນ (Qu Xun) ລັດຖະມົນຕີປະຈຳສະຖານທູດຈີນໃນແອັດສະປາຍ ກ່າວວ່າ ການແລກປ່ຽນທີ່ເພີ່ມຂຶ້ນລະຫວ່າງຈີນ ແລະ ແອັດສະປາຍ ໄດ້ເຮັດໃຫ້ບໍລິການທາງກົດໝາຍແລະການປະຕິບັດຕາມກົດໝາຍ ມີຄວາມສຳຄັນຫຼາຍຂຶ້ນເລື້ອຍໆ; ເຂົາກ່າວຕື່ມວ່າ ຊັບພະຍາກອນທາງກົດໝາຍທີ່ເປັນປະໂຫຍດຈະຊ່ວຍໃຫ້ພົນລະເມືອງ ແລະ ທຸລະກິດຈີນ ສາມາດເຊື່ອມໂຍງເຂົ້າກັບສັງຄົມແອັດສະປາຍໄດ້ດີຂຶ້ນ ແລະ ປ້ອງກັນຄວາມສ່ຽງທາງກົດໝາຍ.

ເວທີປຶກສາຫາລືຄັ້ງນີ້ມີການສົນທະນາກຸ່ມຍ່ອຍ 2 ຫົວຂໍ້ຄື: ປະສົບການດ້ານນິຕິບັນຍັດແລະຕຸລາການ ໃນການຕ້ານການສໍ້ໂກງ, ການປ້ອງກັນອາຊະຍາກຳຈາກຄວາມກຽດຊັງ ແລະ ການບໍລິຫານຕ້ານການຈຳແນກ; ຜູ້ເຂົ້າຮ່ວມປະກອບດ້ວຍຕົວແທນຈາກສະພາຕຸລາການແຫ່ງຊາດ, ຕຳຫຼວດແຫ່ງຊາດ, ກອງກຳລັງປ້ອງກັນພົນລະເຮືອນ, ຫ້ອງການໄອຍະການສູງສຸດ, ແລະ ຫ້ອງການແຫ່ງຊາດເພື່ອຕ້ານອາຊະຍາກຳຈາກຄວາມກຽດຊັງ ຂອງກະຊວງພາຍໃນ.

ນອກຈາກນັ້ນ, ງານຍັງມີການເປີດຕົວຄູ່ມືປະຕິບັດກ່ຽວກັບກົດໝາຍການເຂົ້າເມືອງ: ລະບຽບການ, ການປ່ຽນແປງ ແລະ ໂອກາດເຊິ່ງເປັນຄູ່ມືສອງພາສາຈີນ-ແອັດສະປາຍ ທີ່ຈັດພິມໂດຍສະມາຄົມທະນາຍຄວາມຊາວຈີນໃນປະ ເທດແອັດສະປາຍ (ACDSpain) ເຊິ່ງເປັນຜູ້ຈັດງານເວທີປຶກສາຫາລືຄັ້ງນີ້ດ້ວຍ.

# ຜູ້ນຳລັດຖະສະພາ NATO ປະຊຸມທີ່ Istanbul ເພື່ອຫາລືການໃຊ້ຈ່າຍ ແລະ ການລົງທຶນດ້ານປ້ອງກັນປະເທດ

(Xinhua) - ກອງປະຊຸມສຸດຍອດລັດຖະສະພາ NATO ໄຂຂຶ້ນທີ່ອິສຕັນບູນ, ປະເທດຕວັກກີ ເມື່ອວັນຈັນທີ 29 ມິຖຸນາຜ່ານມາ, ໂດຍເຈົ້າໜ້າທີ່ຂອງພັນທະມິດນີ້ ຮຽກຮ້ອງໃຫ້ມີການລົງທຶນດ້ານການປ້ອງກັນປະເທດທີ່ເຂັ້ມແຂງຂຶ້ນກ່ອນກອງປະຊຸມສຸດຍອດຜູ້ນຳ NATO ທີ່ນະຄອນຫຼວງອັງກາຣາ (Ankara) ໃນອາທິດໜ້າ; ກອງປະຊຸມສຸດຍອດ 2 ວັນ ມີປະທານລັດຖະສະພາ ແລະ ຫົວໜ້າຄະນະຜູ້ແທນ ຈາກ 32 ປະເທດສະມາຊິກ NATO ເຂົ້າຮ່ວມເພື່ອປຶກສາຫາລືກ່ຽວກັບບັນຫາດ້ານຄວາມໝັ້ນຄົງ.




ໃນການເປີດກອງປະຊຸມ, ມາຣ໌ກອສ ເປເຣສເຕຣວໂລ (Marcos Perestrello) ປະທານສະມັດຊາລັດຖະສະພາ NATO ໄດ້ເນັ້ນໜັກເຖິງບົດບາດສຳຄັນຂອງລັດຖະສະພາໃນການສະໜັບສະໜູນການລົງທຶນດ້ານການປ້ອງກັນປະເທດ ແລະ ການປະຕິບັດບຸລິມະສິດດ້ານຄວາມໝັ້ນຄົງຂອງພັນທະມິດ; ເຂົາຮຽກຮ້ອງໃຫ້ພັນທະມິດດຳ ເນີນການ "ການລົງທຶນທີ່ສະຫຼາດ, ວ່ອງໄວ ແລະ ປະສານງານກັນຫຼາຍຂຶ້ນ" ໂດຍລະບຸວ່າ ການສ້າງ NATO ທີ່ເຂັ້ມແຂງຂຶ້ນນັ້ນ ຕ້ອງການຫຼາຍກວ່າການໃຊ້ຈ່າຍທີ່ສູງຂຶ້ນ.

ນາງ ຣາດມິລາ ເຊເກຣິນສະກາ(Radmila Shekerinska) ຮອງເລຂາທິການໃຫຍ່ NATO ກ່າວວ່າກອງປະຊຸມສຸດຍອດຜູ້ນຳລັດແລະລັດຖະບານ NATO ທີ່ຈະຈັດຂຶ້ນໃນວັນທີ 7-8 ກໍລະກົດ ທີ່ອັງກາຣາ ຈະເປັນເວທີເພື່ອສະແດງໃຫ້ເຫັນ "ຄວາມພ້ອມ ແລະ ຄວາມຕັ້ງໃຈໃນການປ້ອງກັນປະເທດຮ່ວມກັນ" ຂອງພັນທະມິດ, "ພວກເຮົາຄາດຫວັງວ່າພັນທະມິດທຸກປະເທດຈະເດີນທາງມາອັງກາຣາພ້ອມດ້ວຍແຜນການທີ່ເປັນຮູບປະທຳເພື່ອບັນລຸເປົ້າໝາຍການໃຊ້ຈ່າຍດ້ານປ້ອງກັນປະເທດ 5% ພາຍໃນປີ 2035".

ໃນການກ່າວເປີດກອງປະຊຸມ, ນູມານ ຄູຣ໌ຕຸນມຸສ (Numan Kurtulmus) ປະທານລັດຖະສະພາຕວັກກີ ໄດ້ເນັ້ນໜັກວ່າ ຈະບໍ່ມີສັນຕິພາບໂລກຫາກປາສະຈາກສັນຕິພາບໃນຕາເວັນອອກກາງແລະຮຽກຮ້ອງໃຫ້ສະມາຊິກ NATO ສະໜັບສະໜູນຄວາມພະຍາຍາມໃນການຟື້ນຟູສະຖຽນລະພາບໃນພາກພື້ນ; ຄູຣ໌ຕຸນມຸສ ຮຽກຮ້ອງໃຫ້ຢຸດຕິປະຕິບັດການທາງທະຫານຂອງອິດສະຣາແອນໃນເຂດກາຊາໂດຍທັນທີ, ເຊິ່ງເຂົາອະທິບາຍວ່າໄດ້ເຖິງລະດັບ "ການຂ້າລ້າງເຜົ່າພັນ" ແລ້ວ ພ້ອມທັງເສີມວ່າ ການແກ້ໄຂບັນຫາປາແລັດສະຕິນດ້ວຍການສ້າງຕັ້ງລັດສອງລັດແມ່ນສິ່ງຈຳເປັນສຳລັບສັນຕິພາບທີ່ຍືນຍົງ; ເຂົາຍັງຍິນດີກັບຄວາມຄືບໜ້າໃນທາງບວກທີ່ຜ່ານມາ ເຊິ່ງມີຈຸດປະສົງເພື່ອຢຸດ ຕິຄວາມເຄັ່ງຕຶງລະຫວ່າງສະຫະລັດ ກັບ ອີຣານ ພ້ອມທັງສະແດງຄວາມຫວັງສຳລັບການສ້າງສັນຕິພາບຖາວອນ, ເຊິ່ງເຂົາກ່າວວ່າມີຄວາມສຳຄັນຢ່າງຍິ່ງຕໍ່ຄວາມໝັ້ນຄົງທົ່ວໂລກ.



*6 ເດືອນຕົ້ນປີ 2026 ສາມາດມ້າງຄະດີຢາເສບຕິດໄດ້ທັງໝົດ 1,786 ເລື່ອງ, ຈັບຜູ້ຖືກຫາ 4,025 ຄົນ (ມີຄົນຕ່າງປະເທດ 93 ຄົນ), ຍຶດໄດ້ຂອງກາງປະເພດຢາເສບຕິດຈຳນວນຫຼາຍ ແລະ ຍຶດພາຫະນະໄດ້ຈຳນວນໜຶ່ງ; ນຳເປົ້າໝາຍຜູ້ເສບຢາເສບຕິດ (ຜູ້ຖືກເຄາະຮ້າຍ) ເຂົ້າສູນບຳບັດ-ປິ່ນປົວ, ຟື້ນຟູສຸຂະພາບ ທີ່ມີໃນທົ່ວປະເທດ 15 ສູນ ມີ 7,046 ຄົນ, ຍິງ 412 ຄົນ (ປິ່ນປົວດີ ແລະ ກັບຄືນບ້ານ 2,769 ຄົນ, ຍິງ 217 ຄົນ, ສືບຕໍ່ປິ່ນປົວ 4,277 ຄົນ, ຍິງ 195 ຄົນ).*

*ແກ້ໄຂປາກົດການຫຍໍ້ທໍ້, ກຸ່ມແກ໊ງສໍ້ໂກງທາງເອເລັກໂຕຣນິກ (ອາຊະຍາກຳທາງໄຊເບີ) ໄດ້ທັງໝົດ 44 ຄັ້ງ, ກັກຕົວຜູ້ຖືກຫາໄດ້ຈຳນວນ 4,482 ຄົນ, ຍິງ 1,032 ຄົນ ລວມມີ 25 ສັນຊາດ (ໃນນັ້ນຄົນລາວ 779 ຄົນ, ຍິງ 203 ຄົນ).*

## 6 ເດືອນທ້າຍປີ...

(ຕໍ່ຈາກໜ້າ 1)

17.4% (ມະຕິ ສພຊ: ຂະຫຍາຍຕົວ 4.6%, ກວມເອົາ 21.9%); ຂະແໜງອຸດສາຫະກຳ ຂະຫຍາຍຕົວ 5.1% ກວມເອົາ 35.0% (ມະຕິ ສພຊ: ຂະຫຍາຍຕົວ 5.1%, ກວມເອົາ 31.1%); ຂະແໜງບໍລິການ ຂະຫຍາຍຕົວ 5.3% ກວມເອົາ 37.2% (ມະຕິ ສພຊ: ຂະຫຍາຍຕົວ 6.6%, ກວມເອົາ 36.6%) ແລະ ພາສີ-ອາກອນຜະລິດຕະພັນສຸດທິ ຂະຫຍາຍຕົວ 4.9% ກວມເອົາ 10.5% (ມະຕິ ສພຊ: ຂະຫຍາຍຕົວ 4%, ກວມເອົາ 10.4%).

ເກັບລາຍຮັບໄດ້ 44,956 ຕື້ກີບ ເທົ່າກັບ 54% ຂອງແຜນການ, ທຽບໃສ່ໄລຍະດຽວກັນເພີ່ມຂຶ້ນ 19% ເປັນເງິນປະມານ 7,198 ຕື້ກີບ, ສາເຫດລາຍຮັບເພີ່ມຂຶ້ນຍ້ອນການສຸມໃສ່ຫັນເປັນທັນສະໄໝ ໂດຍສະເພາະການຂະຫຍາຍອາກອນມູນຄ່າເພີ່ມ, ສຳລັບລາຍຈ່າຍທັງໝົດ ປະຕິບັດໄດ້ 30,126 ຕື້ກີບ ເທົ່າກັບ 37% ຂອງແຜນການ; ອັດຕາເງິນເຟີ້ຢູ່ໃນລະດັບ 8% (ມະຕິ ສພຊ: 5% ເໜັງຕີງ ±2), ຄ່າເງິນກີບຍັງມີສະຖຽນລະພາບ ເຊິ່ງສະແດງອອກຄື: ດັດຊະນີເງິນກີບສະເລ່ຍອ່ອນຄ່າ 3.09% ທຽບກັບໄລຍະດຽວກັນຂອງປີ 2025.

ຜະລິດ ແລະ ສົ່ງອອກຜະລິດຕະພັນກະສິກຳ ແລະ ປ່າໄມ້ ໄດ້ 1,009.31 ລ້ານໂດລາ ເທົ່າກັບ 53.12% ຂອງແຜນການ (ມະຕິ ສພຊ: 1,900 ລ້ານໂດລາ).

ມູນຄ່າການຜະລິດອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ປະຕິບັດໄດ້ 11,691.76 ຕື້ກີບ ເທົ່າກັບ 50% ຂອງແຜນການ (ມະຕິສພຊ: 23,383.53 ຕື້ກີບ) ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 16.79%, ມູນຄ່າການຈໍລະຈອນສິນຄ້າ (ຂາຍຍົກ-ຂາຍຍ່ອຍ ແລະ ສ້ອມແປງ) ປະຕິບັດໄດ້ 62,766 ຕື້ກີບ ເທົ່າກັບ 50% ຂອງແຜນການ (ມະຕິ ສພຊ: 125,533.81 ຕື້ກີບ) ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 21.80%.

ການຜະລິດພະລັງງານໄຟຟ້າປະຕິບັດໄດ້ 26,674.76 ລ້ານກິໂລວັດໂມງ ເທົ່າກັບ 54.58% ຂອງແຜນການ (ມະຕິ ສພຊ: 58,709.86 ລ້ານກິໂລວັດໂມງ) ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 8.6% ມີມູນຄ່າ 35,411.54 ຕື້ກີບ ເທົ່າກັບ 45.83% ຂອງແຜນການ (ມະຕິ ສພຊ: 77,266.69 ຕື້ກີບ) ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 10.58%.

ການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ປະຕິບັດໄດ້ 22,446.38 ຕື້ກີບ ເທົ່າກັບ 52.65% ຂອງແຜນການ (ມະຕິ ສພຊ: 42,630.08 ຕື້ກີບ) ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ຫຼຸດລົງ 18.43%.

ການບໍລິການຂົນສົ່ງສິນຄ້າປະຕິບັດໄດ້ 8,648.31 ພັນໂຕນ ເທົ່າກັບ 53.49% ຂອງແຜນການ (ມະຕິ ສພຊ: 15,724.60 ພັນໂຕນ), ການບໍລິການຂົນສົ່ງໂດຍສານ ປະຕິບັດໄດ້ 54,211.26 ພັນເທື່ອຄົນ ເທົ່າກັບ 49.41% ຂອງແຜນການ (ມະຕິ ສພຊ: 118,570.10 ພັນເທື່ອຄົນ).

ການແກ້ໄຂບັນຫາການຂາດແຄນ ແລະ ການເໜັງຕີງຂອງລາຄານ້ຳມັນ: ໄດ້ອອກຄຳສັ່ງວ່າດ້ວຍການເພີ່ມທະວີແກ້ໄຂຜົນກະທົບຈາກລາຄານ້ຳມັນເຊື້ອໄຟ ໂດຍປະຕິບັດນະໂຍບາຍອຸດໜູນສັງຄົມ ດ້ວຍການຫຼຸດອັດຕາອາກອນຊົມໃຊ້ນ້ຳມັນເຊື້ອໄຟ ເປັນຈຳນວນ 1,935 ຕື້ກີບ ແລະ ກອງທຶນນ້ຳມັນ 493.79 ຕື້ກີບ, ພ້ອມນັ້ນ ໄດ້ດັດສົມເງິນຕາຕ່າງປະເທດໃຫ້ແກ່ການນຳເຂົ້ານ້ຳມັນເຊື້ອໄຟ 414.40 ລ້ານໂດລາ ເພື່ອຈັດຊື້ນ້ຳມັນໃຫ້ປົກກະຕິ ຮັບປະກັນການສະໜອງໃຫ້ສັງຄົມ ແລະ ສຳຮອງສຸກເສີນ; ພ້ອມກັນນັ້ນ, ກໍໄດ້ກຳນົດບັນດາມາດຕະການສຸກເສີນ, ສະເພາະໜ້າ ແລະ ຍາວນານ ເພື່ອຮັບປະກັນຄວາມໝັ້ນຄົງດ້ານພະລັງງານ ບົນຈິດໃຈເພີ່ມທະວີມາດຕະການປະຢັດ, ຫັນວິກິດເປັນໂອກາດເປັນຕົ້ນແມ່ນມາດຕະການຊຸກຍູ້ໃຫ້ປະຊາຊົນຫັນມານຳໃຊ້ລົດໄຟຟ້າ ຫຼື ພະລັງງານທົດແທນ, ພະລັງງານທາງເລືອກອື່ນ ເພື່ອຫຼຸດຜ່ອນການນຳເຂົ້ານ້ຳມັນເຊື້ອໄຟ; ໄດ້ເປີດບໍລິການນຳໃຊ້ລົດ BRT, ລົດແທັກຊີ, 3 ລໍ້, 2 ລໍ້ ໄຟຟ້າ ເພື່ອຊ່ວຍເຫຼືອປະຊາຊົນໃນຊ່ວງວິກິດການ. ມາຮອດປັດຈຸບັນ, ການສະໜອງນ້ຳມັນໃຫ້ແກ່ສັງຄົມແມ່ນປົກກະຕິ ແລະ ລາຄານ້ຳມັນເຊື້ອໄຟກໍຄ່ອຍໆຫຼຸດລົງ. ສຳລັບມາດຕະການໄລຍະກາງ ແລະ ໄລຍະຍາວ ແມ່ນລັດຖະບານຈະສຸມໃສ່ຄົ້ນຄວ້າແຫຼ່ງນຳເຂົ້ານ້ຳມັນເຊື້ອໄຟຈາກຫຼາຍແຫຼ່ງ ແລະ ສ້າງຄັງແຮສຳຮອງດ້ານນ້ຳມັນເຊື້ອໄຟໃຫ້ຫຼາຍຂຶ້ນ ແລະ ຫັນປ່ຽນໄປໃຊ້ລົດໄຟຟ້າ ແລະ ພະລັງງານທາງເລືອກ ໃຫ້ແຂງແຮງກວ່າເກົ່າ (ປັດຈຸບັນມີລົດໄຟຟ້າ ແລະ ໄຟຟ້າປະສົມປະສານ 17,357 ຄັນ ເທົ່າກັບ 0.5% ຂອງພາຫະນະທັງໝົດ 3 ລ້ານກວ່າຄັນ, ຄາດໝາຍປີ 2030 ໃຫ້ບັນລຸ 30%).

ສຳລັບທິດທາງແຜນການ 6 ເດືອນທ້າຍປີ, ສືບຕໍ່ຊຸກຍູ້ການເຕີບໂຕເສດຖະກິດໃຫ້ບັນລຸໄດ້ໃນລະດັບ 5.5%, GDP ສະເລ່ຍລາຍຮັບຕໍ່ຫົວຄົນ ໃຫ້ໄດ້ 2,238 ໂດລາ ແລະ ລາຍໄດ້ແຫ່ງຊາດ (GNI) ສະເລ່ຍຕໍ່ຫົວຄົນ ໃຫ້ໄດ້ 2,101 ໂດລາ ໂດຍຈະສຸມໃສ່ມາດຕະການຈຳນວນໜຶ່ງດັ່ງນີ້:

1) ຊຸກຍູ້ສົ່ງເສີມການຜະລິດສະບຽງອາຫານໃຫ້ໄດ້ຕາມແຜນ, ເລັ່ງຊຸກຍູ້ການຜະລິດສິນຄ້າກະສິກຳ ຕິດພັນກັບການປຸງແຕ່ງ ແລະ ມີລະບົບຈັດເກັບຮັກສາທີ່ດີແຕ່ຫົວທີ ເພື່ອສົ່ງອອກ ໂດຍສຸມໃສ່ພືດ-ສັດທີ່ໄດ້ມີການເຈລະຈາເຕັກນິກແລ້ວໃຫ້ໄດ້ 1,900 ລ້ານໂດລາ.

2) ຊຸກຍູ້ການຜະລິດແຮ່ທາດເພື່ອສົ່ງອອກ ໃຫ້ໄດ້ 2,185.9 ລ້ານໂດລາ.

3) ສົ່ງອອກກະແສໄຟຟ້າໃຫ້ແກ່ບັນດາປະເທດເພື່ອນບ້ານ ໃຫ້ໄດ້ 45,705.94 ລ້ານກິໂລວັດໂມງ, ມູນຄ່າ 2,829.04 ລ້ານໂດລາ ແລະ ເລັ່ງເຈລະຈາກັບຕະຫຼາດຕ່າງປະເທດ ເພື່ອເພີ່ມການສົ່ງອອກ.

4) ຊຸກຍູ້ໂຄງການພື້ນຖານໂຄງລ່າງຂະໜາດໃຫຍ່ທີ່ໄດ້ອະນຸມັດ ແລະ ເຊັນສັນຍາແລ້ວ ໃຫ້ເລີ່ມປະຕິບັດໂດຍໄວ ເປັນຕົ້ນ: ທາງດ່ວນວຽງຈັນ-ບໍ່ເຕັນ, ທາງດ່ວນແຕ່ປາກຊັນ-ຊາຍແດນ ລາວ-ຫວຽດ, ທາງລົດໄຟແຕ່ທ່າແຂກ-ຊາຍແດນລາວ-ຫວຽດນາມ.

5) ສູ້ຊົນໃຫ້ມີນັກທ່ອງທ່ຽວຕ່າງປະເທດ ບັນລຸ 4.46 ລ້ານເທື່ອຄົນ.

6) ຄົ້ນຄວ້ານະໂຍບາຍສິນເຊື່ອ ໂດຍສະເພາະສິນເຊື່ອຂະແໜງກະສິກຳ, ອຸດສາຫະກຳປຸງແຕ່ງ, ສິນເຊື່ອສຳລັບການຜະລິດສົ່ງອອກ ແລະ ທົດແທນການນຳເຂົ້າ ດ້ວຍການໝູນໃຊ້ແຫຼ່ງທຶນ ຫຼື ສະພາບຄ່ອງສ່ວນເກີນຂອງບັນດາທະນາຄານທຸລະກິດເພື່ອຊຸກຍູ້ການຂະຫຍາຍຕົວເສດຖະກິດ; ຄົ້ນຄວ້າແຫຼ່ງທຶນເພື່ອຊ່ວຍຊຸກຍູ້ຜູ້ປະກອບການຜະລິດສະບຽງອາຫານທີ່ຈຳເປັນ.




***#ບ່າວກະບື***

**ມັນ**ງ່າຍທີ່ຈະບອກວ່າຊາຍຄົນໃດແຕ່ງງານແລ້ວ ຫຼືຍັງ, ພຽງແຕ່ເບິ່ງເຂົາຂັບລົດຕອນມີແມ່ຍິງນັ່ງຢູ່ຂ້າງໆ, ຖ້າມືທັງສອງເບື້ອງຂອງເຂົາຈັບພວງມະໄລ, ທ່ານກໍສາມາດໝັ້ນໃຈໄດ້ໂລດວ່າ ຊາຍຄົນນັ້ນແຕ່ງງານແລ້ວ.

***# BAOKBU***

It's easy to tell if a man is married or not. Just watch him drive a car with a woman sitting beside him. If both hands are on the wheel, you can be sure he is married.

## ສູ້ຊົນ...

(ຕໍ່ຈາກໜ້າ 1)

ຕິພາບ ພົມວິຫານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ໃຫ້ຮູ້ວ່າ: ການຮ່າງວາລະແຫ່ງຊາດນີ້ ໄດ້ນຳໃຊ້ຂໍ້ມູນຈາກຜົນການປະເມີນສະພາບພົ້ນທຸກ ແລະ ພັດທະນາ ທ້າຍສະໄໝ ປີ 2025 ຕາມດຳລັດ 348 ເປັນພື້ນຖານ ເຊິ່ງໄດ້ດຳເນີນການປະເມີນ 1,283,251 ຄອບຄົວ, 8,413 ບ້ານ ແລະ 148 ເມືອງ ໃນຂອບເຂດທົ່ວປະເທດ; ຜົນການປະເມີນຄັ້ງນີ້ ສະຫຼຸບໃຫ້ເຫັນວ່າ ຍັງມີຄອບຄົວບໍ່ພົ້ນທຸກ 189,792 ຄອບຄົວ ເທົ່າກັບ 14.78%, ບ້ານບໍ່ພົ້ນທຸກ 2,173 ບ້ານ ກວມ 25.83% ແລະ ເມືອງບໍ່ພົ້ນທຸກ 66 ເມືອງ ກວມ 44.59% ເຊິ່ງມີສາເຫດຕົ້ນຕໍດັ່ງນີ້:

ຄອບຄົວບໍ່ພົ້ນທຸກ ມີ 2 ສາເຫດຕົ້ນຕໍຄື: 1) ຄອບຄົວຂາດອາຊີບ ຫຼື ແຫຼ່ງລາຍຮັບໝັ້ນຄົງ ເນື່ອງຈາກຂາດຄວາມຮູ້, ຄວາມກະຕືລືລົ້ນ ໃນການພັດທະນາຕົນເອງ, ຄອງຄອຍການຊ່ວຍເຫຼືອຈາກພາກລັດ ແລະ ວິທີທຳມາຫາກິນແບບຄອງເດີມ; 2) ບໍ່ສາມາດເຂົ້າເຖິງການບໍລິການສາທາລະນະຂັ້ນພື້ນຖານ ເປັນຕົ້ນແມ່ນການເຂົ້າເຖິງການບໍລິການສາທາລະນະສຸກ, ການສຶກສາ, ນ້ຳສະອາດ.

ບ້ານບໍ່ພົ້ນທຸກ ມີ 3 ສາເຫດຕົ້ນຕໍຄື: 1) ເສັ້ນທາງຄົມມະນາຄົມບໍ່ສາມາດທຽວໄດ້ຕະຫຼອດປີ; 2) ບໍ່ມີຕາຂ່າຍໄຟຟ້າໃນລະບົບ; 3) ບໍ່ສາມາດເຂົ້າເຖິງການບໍລິການດ້ານໂທລະຄົມມະນາຄົມ ແລະ ການຂົນສົ່ງ.

ເມືອງບໍ່ພົ້ນທຸກ ມີ 3 ສາເຫດຕົ້ນຕໍຄື: 1) ເສັ້ນທາງຄົມມະນາຄົມບໍ່ສາມາດທຽວໄດ້ຕະຫຼອດປີ ແລະ ຍັງບໍ່ທັນເຊື່ອມຈອດກັບບ້ານພາຍໃນເມືອງ; 2) ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ບໍ່ໄດ້ຮັບການຄຸ້ມຄອງ, ປົກປັກຮັກສາ ແລະ ນຳໃຊ້ຢ່າງມີປະສິດທິຜົນ; 3) ເທດສະບານເມືອງ ບໍ່ໄດ້ຊົມໃຊ້ນ້ຳປະປາຊຸມຊົນ ຫຼື ລະບົບນ້ຳປະປາ.

ສະນັ້ນ, ລັດຖະບານໄດ້ຖືເອົາການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ເປັນວຽກບຸລິມະສິດ, ຈຳເປັນ, ຮີບດ່ວນ ແລະ ຍົກເປັນວາລະແຫ່ງຊາດ ແຕ່ປີ 2027-2030 ເພື່ອສູ້ຊົນສ້າງຄອບຄົວພົ້ນທຸກໃຫ້ໄດ້ຫຼາຍກວ່າ 100,000 ຄອບຄົວ ໃນຈຳນວນຄອບຄົວທຸກຍາກທີ່ຍັງເຫຼືອ 189,792 ຄອບຄົວ, ເຮັດໃຫ້ອັດຕາສ່ວນຄອບຄົວທຸກຍາກຫຼຸດຈາກ 14.78% ຍັງເຫຼືອໜຶ່ງຕົວເລກ; ສ້າງບ້ານພົ້ນທຸກໃຫ້ໄດ້ຫຼາຍກວ່າ 1,000 ບ້ານ ໃນຈຳນວນບ້ານທຸກຍາກທີ່ຍັງເຫຼືອ 2,173 ບ້ານ, ສ້າງເມືອງພົ້ນທຸກໃຫ້ໄດ້ຫຼາຍກວ່າ 25 ເມືອງ ໃນຈຳນວນເມືອງທຸກຍາກທີ່ຍັງເຫຼືອ 66 ເມືອງ. ໃນນີ້, ຈະສ້າງບ້ານຈຸດສຸມຕົວແບບໃນການແກ້ໄຂຄວາມທຸກຍາກ ໃຫ້ໄດ້ຢ່າງໜ້ອຍແຂວງລະ 4-5 ບ້ານ.

**ຜູ້ຊີ້ນຳ**

ທ່ານ ເຂັມພອນ ອາໂນໄທ

**ຄະນະບັນນາທິການ**

ທ່ານ ບໍ ຫານປະເສີດ ຫົວໜ້າ ບກ
ທ່ານ ເອລາວັນ ພັນທະລາວົງ ຮອງຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າ ບກ

**ກອງບັນນາທິການ**

ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**

ທ່ານ ນາງ ກຸກກິກ ບຸດດາໄຊ

**ຮູບພາບປະກອບ**

ທ່ານ ສອນສັກ ວັນວິໄຊ